ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປ່າໄມ້

# ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ
# ໃນໄລຍະ ປີ 2022 ຮອດປີ 2032



ມີນາ 2022

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ກະສິກຳ ແລະ ປ່າໄມ້

1482

ເລກທີ.................../ກປ

ນະຄອນຫຼວງວຽງຈັນ, ວັນທີ 20 APR 2022

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳ ແລະ ຄະນະວິຊາການສ້າງແຜນ ຄຸ້ມຄອງຈຳນວນປະຊາກອນຊ້າງປ່າລະດັບຊາດ ສະບັບເລກທີ 2796/ກປ, ລົງວັນທີ 10 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2026 /ກປມ, ລົງວັນທີ 28 ມີນາ 2022.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

**ມາດຕາ 1** ເຫັນດີຮັບຮອງ ແລະ ປະກາດໃຊ້ **"ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032"**.

**ມາດຕາ 2** ມອບໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດ ແຜນດຳເນີນງານຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ກອງອ້ອມຂ້າງກະຊວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດ ແຜນດຳເນີນງານດັ່ງກ່າວ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

**ປອ. ເພັດ ພົມພິພັກ**

## ຄຳນຳ

ກົມປ່າໄມ້ ແມ່ນເປັນເສນາທິການ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ໃນການຈັດຕັ້ງ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແຫ່ງ ສປປ ລາວ ໃນການຄຸ້ມຄອງ, ການປົກປັກຮັກສາປ່າໄມ້, ການອະນຸລັກ ສັດນ້ຳ ແລະ ສັດປ່າ ໃນຂອບເຂດທົ່ວປະເທດ ໂດຍສະເພາະແມ່ນ ຊ້າງອາຊີ. ຊ້າງອາຊີເປັນສັດປ່າປະເພດຫວງຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ເປັນສັດປ່າຊະນິດທີ່ມີຄວາມສຳຄັນສູງ ທີ່ຕ້ອງໄດ້ເອົາໃຈໃສ່ໃນການປົກປັກຮັກສາ ຍ້ອນວ່າ ຊ້າງອາຊີ ມີບົດບາດສຳຄັນໃນລະບົບນິເວດວິທະຍາ, ມີຄຸນຄ່າສູງຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງປະເທດເຮົາ.

ແຜນດຳເນີນງານ ຊ້າງແຫ່ງຊາດ ເປັນເຄື່ອງມືສຳຄັນ ໃນການຈັດຕັ້ງປະຕິບັດ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ອະນຸລັກ ຊັບພະຍາກອນປ່າໄມ້, ສັດນ້ຳ ແລະ ສັດປ່າ ໂດຍສະເພາະແມ່ນ ຊ້າງໃຫ້ມີຄວາມຍືນຍົງ ເຊິ່ງໄດ້ຮວບຮວມແນວຄວາມຄິດຂອງທຸກໆພາກສ່ວນ, ອົງການ ຈັດຕັ້ງພາກລັດໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນ ພ້ອມທັງອົງການຈັດຕັ້ງສາກົນຕ່າງໆ (WCS, IUCN, WWF) ທີ່ເຮັດວຽກງານດ້ານອະນຸລັກ ໃນ ສປປ ລາວ ໂດຍຜ່ານການຄົ້ນຄວ້າປຶກສາຫາລືໃນກອງປະຊຸມຂອງຄະນະວິຊາການ ແລະ ກອງປະຊຸມທົ່ວປະເທດ. ສຳລັບຂໍ້ມູນທີ່ເປັນພື້ນຖານໃນການສ້າງແຜນດຳເນີນງານ ແມ່ນໄດ້ມາຈາກການສຳຫຼວດ ພາກສະໜາມຕົວຈິງ ແລະ ຂໍ້ມູນຈາກການສຳພາດພະນັກງານປ່າໄມ້ຢູ່ແຕ່ລະທ້ອງຖິ່ນ ແລະ ຊາວບ້ານ, ໄດ້ລວມເອົາແນວຄວາມຄິດທາງດ້ານວິຊາການ ຈາກຜູ້ທີ່ມີປະສົບການຂອງລາວ. ແຜນດຳເນີນງານດັ່ງກ່າວ ໄດ້ກຳນົດໜ້າວຽກທີ່ສຳຄັນ ສະແດງໃຫ້ເຫັນວິທີແກ້ໄຂບັນຫາຂໍ້ຂັດແຍ່ງລະຫວ່າງຄົນ ກັບ ຊ້າງປ່າ ແລະ ການຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາຊ້າງ ໃຫ້ມີຄວາມຍືນຍົງ ເພື່ອເປັນແນວທາງນະໂຍບາຍໃນການຈັດຕັ້ງປະຕິບັດ ພ້ອມທັງເປັນບ່ອນອີງໃນການຜັນຂະຫຍາຍໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະພື້ນທີ່ທີ່ໄດ້ຮັບຜົນກະທົບຈາກຊ້າງປ່າ ແລະ ມີບັນຫາຂໍ້ຂັດແຍ່ງລະຫວ່າງຄົນ ກັບຊ້າງປ່າ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ແຜນດຳເນີນງານ ຊ້າງແຫ່ງຊາດ ຈະຖືກນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຢ່າງເປັນຮູບປະທຳ ແລະ ມີຜົນປະໂຫຍດສູງສຸດ ໃຫ້ແກ່ ສປປ ລາວ ໃນອະນາຄົດ ແລະ ເຊື່ອໝັ້ນວ່າ ແຜນດຳເນີນງານຊ້າງແຫ່ງຊາດນີ້ ຈະເປັນເຄື່ອງມືທີ່ສຳຄັນໃນການໃຫ້ຄຳແນະນຳກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ຄຸ້ມຄອງຖິ່ນທີ່ຢູ່ອາໄສ ຂອງສັດປ່າ ໂດຍສະເພາະແມ່ນປະຊາກອນ ຊ້າງອາຊີ. ແຜນດຳເນີນງານນີ້ ຈະປະສົບຜົນສຳເລັດໄດ້ ແມ່ນອີງໃສ່ການຮ່ວມມືຂອງຫຼາຍໆພາກສ່ວນ ທັງພາກລັດ ແລະ ເອກະຊົນ, ອົງການປົກຄອງທ້ອງຖິ່ນ ລວມທັງອົງການຈັດຕັ້ງສາກົນ ຕ້ອງໄດ້ເຮັດວຽກຮ່ວມກັນ ເພື່ອຮັບປະກັນທຸກກິດຈະກຳຢູ່ໃນ ແຜນດຳເນີນງານ ຊ້າງແຫ່ງຊາດໄດ້ຈັດຕັ້ງປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້ ແລະ ຮຽກຮ້ອງມາຍັງປະຊາຊົນລາວທຸກຊົນເຜົ່າ ຈົ່ງຮ່ວມແຮງຮ່ວມໃຈຈັດຕັ້ງປະຕິບັດ ແຜນດຳເນີນງານດັ່ງກ່າວ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2022

**ຫົວໜ້າກົມ**

ກະຊວງກະສິກຳແລະປ່າໄມ້ ກົມປ່າໄມ້

ຊູຊາດ ໄຊຍະກຸມມານ

# ຄຳຂອບໃຈ

ກົມປ່າໄມ້ ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ຊ່ຽວຊານ, ຄະນະຮັບຜິດຊອບຂຽນແຜນດຳເນີນງານ ຊ້າງແຫ່ງຊາດ ທີ່ໄດ້ມີສ່ວນຮ່ວມໃນການຄົ້ນຄວ້າ ແລະ ປະກອບຄວາມຄິດເຫັນ ໃນການແລກປ່ຽນປະສົບການ ເຂົ້າໃນແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ຈຶ່ງໄດ້ສ້າງຂຶ້ນ ໂດຍອີງຕາມກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007, ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນ ການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າປະເພດຫວງຫ້າມ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018 ແລະ ໃຫ້ການສະໜັບສະໜູນທຶນໂດຍອົງການກອງທຶນອະນຸລັກທຳມະຊາດໂລກ (WWF) ແລະ ການຮ່ວມມືຂອງອົງການ IUCN SSC Asia Elephant Specialist Group (AsESG).

ຄະນະວິຊາການຂຽນແຜນດຳເນີນງານ ຊ້າງແຫ່ງຊາດ ໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນການຄົ້ນຄວ້າ ດ້ວຍຄວາມເອົາໃຈໃສ່ ພາຍໃຕ້ການຊີ້ນຳຂອງຄະນະກົມປ່າໄມ້. ນອກຈາກນັ້ນ, ຍັງມີບັນດາພະແນກພາຍໃນ ກົມປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ກົມກວດກາປ່າໄມ້, ກົມລ້ຽງສັດ ແລະ ການປະມົງ ແລະ ຂະແໜງການ ປ່າໄມ້ ໃນຂອບເຂດທົ່ວປະເທດ ພ້ອມດ້ວຍຊ່ຽວຊານຕ່າງປະເທດຈຳນວນໜຶ່ງ ເປັນຕົ້ນ ທ່ານ Yoganand Kandasamy ຈາກ ອົງການ ກອງທຶນອະນຸລັກທຳມະຊາດໂລກ (WWF) ປະຈຳ ສປປ ລາວ, ບັນດາໂຄງການຊ່ວຍເຫຼືອຂອງສາກົນຕ່າງໆ ກໍ່ໄດ້ປະກອບສ່ວນໃຫ້ການສະໜັບສະໜູນ ແລະ ການຮ່ວມມື ເປັນຕົ້ນ: ອົງການ WCS, ICBF, BCC, IUCN, CCL ແລະ UNDP.

ແຜນດຳເນີນງານນີ້ ແມ່ນຄວາມຮັບຜິດຊອບຂອງພະແນກ ຄຸ້ມຄອງສັດນ້ຳ ແລະ ສັດປ່າ ໂດຍ ທ່ານ ສຸມັນທາ ຈຸນລະມະນີ, ທ່ານ ຈັນທອນ ໂພທິໄຕ, ທ່ານ ບຸນທະວີ ມະນີວົງ ແລະ ຊ່ຽວຊານ ຈາກອົງການກອງທຶນອະນຸລັກທຳມະຊາດໂລກ (WWF) ໂດຍທ່ານ ຄຳຄູນ ຄູນບໍລິນ ທີ່ໄດ້ລວບລວມຂໍ້ມູນຂອງທຸກໆຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະພະນັກງານຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອສ້າງແຜນດຳເນີນງານຊ້າງແຫ່ງຊາດ ຢ່າງປະສົບຜົນສຳເລັດ.

# ຂໍຂອບໃຈ

# ສາລະບານ

ໜ້າ

ຄຳນຳ ........................................................................................................ i
ຄຳຂອບໃຈ ................................................................................................... ii
ສາລະບານ .................................................................................................. iii
ຄວາມໝາຍຕົວຫຍໍ້ ........................................................................................... v
ການອະທິບາຍຄຳສັບ ........................................................................................ vi
ພາກທີ I ພາກສະເໜີ .......................................................................................... 1
1.1 ສະພາບລວມ ............................................................................................. 1
1.2 ການຄຸ້ມຄອງປະຊາກອນຊ້າງ .......................................................................... 4
1.3 ການຮ່ວມມື .............................................................................................. 5
1.3.1 ການຮ່ວມມືພາຍໃນ ................................................................................... 5
1.3.2 ການຮ່ວມມືພາກພື້ນ ແລະ ສາກົນ .................................................................. 5
ພາກທີ II ໄພຂົ່ມຂູ່ ແລະ ສິ່ງທ້າທາຍ ........................................................................ 6
2.1 ໄພຂົ່ມຂູ່ ຕໍ່ປະຊາກອນຊ້າງ ............................................................................. 6
2.1.1 ການຂ້າ ແລະ ລ່າຊ້າງ ................................................................................. 6
2.1.2 ການກໍ່ສ້າງພື້ນຖານໂຄງລ່າງ ......................................................................... 6
2.2 ສິ່ງທ້າທາຍຕໍ່ການຄຸ້ມຄອງປະຊາກອນຊ້າງ .......................................................... 7
2.2.1 ຂໍ້ມູນໃນການຄຸ້ມຄອງຊ້າງ ............................................................................ 7
2.2.2 ຖິ່ນທີ່ຢູ່ອາໄສຂອງຊ້າງຖືກທຳລາຍ .................................................................... 7
2.2.3 ຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ................................................................. 8
2.2.4 ການໂຄສະນາເຜີຍແຜ່ .................................................................................. 8
2.2.5 ການມີສ່ວນຮ່ວມ ....................................................................................... 8
2.3 ການວິເຄາະ ແລະ ກຳນົດບັນຫາ ....................................................................... 9
ພາກທີ III ວິໄສທັດ 2022 ຮອດປີ 2032 ................................................................... 10
3.1 ວິໄສທັດ ................................................................................................. 10
3.2 ເປົ້າໝາຍ ................................................................................................. 10
3.3 ຜົນປະໂຫຍດທີ່ຈະໄດ້ຮັບ ................................................................................ 10

ພາກທີ IV ແຜນດຳເນີນງານ ຊ້າງແຫ່ງຊາດ ....................11
4.1 ແຜນດຳເນີນງານ ຊ້າງແຫ່ງຊາດ ....................11
4.1.1 ແຜນງານ ປົກປັກຮັກສາ ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານ ຂອງຊ້າງປ່າ....................11
4.1.2 ແຜນງານ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ....................12
4.1.3 ແຜນງານ ສະກັດກັ້ນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ....................12
4.1.4 ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ....................13
4.1.5 ແຜນງານ ສ້າງຄວາມສາມາດໃຫ້ແກ່ພະນັກງານ ໃນການຄຸ້ມຄອງຊ້າງລ້ຽງ ແລະ ຊ້າງປ່າ ....14
4.1.6 ແຜນງານ ໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ ໃນການອະນຸລັກຊ້າງ....................15
4.2 ຄວາມຮັບຜິດຊອບ ....................16
4.3 ງົບປະມານ....................16
4.4 ແຫຼ່ງທຶນ ....................17
ພາກທີ V ການຈັດຕັ້ງປະຕິບັດ ແລະ ປະເມີນຜົນ ....................18
5.1 ການຈັດຕັ້ງປະຕິບັດ ....................18
5.2 ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ....................18
5.2.1. ການຕິດຕາມກວດກາ ....................18
5.2.2. ການປະເມີນຜົນ ....................18
5.2.3. ການລາຍງານ ....................18
ເອກະສານອ້າງອີງ....................19
ເອກະສານຊ້ອນທ້າຍ....................21

# ຄວາມໝາຍຕົວຫຍໍ້

| | |
|---|---|
| CITES | = Convention on International Trade in Endangered Species of Wild Fauna and Flora - ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ; |
| DOF | = Department of Forestry - ກົມປ່າໄມ້; |
| DOFI | = Department of Forestry Inspection - ກົມກວດກາປ່າໄມ້; |
| DLF | = Department of Livestock and Fisheries - ກົມລ້ຽງສັດ ແລະ ການປະມົງ; |
| EPF | = Environment Protection Fund - ກອງທຶນປົກປັກຮັກສາສິ່ງແວດລ້ອມ; |
| FAO | = Food and Agriculture Organization - ອົງການອາຫານ ແລະ ການກະເສດ; |
| IUCN | = International Union for Conservation of Nature - ອົງການອະນຸລັກທຳມະຊາດສາກົນ; |
| Lao-WEN | = Lao Wildlife Enforcement Network - ເຄືອຂ່າຍບັງຄັບໃຊ້ກົດໝາຍກ່ຽວກັບສັດປ່າຂອງ ສປປ ລາວ; |
| MAF | = Ministry of Agriculture and Forestry - ກະຊວງ ກະສິກຳ ແລະ ປ່າໄມ້; |
| MIKE | = Monitoring the Illegal Killing of Elephants - ການຕິດຕາມການລັກລອບຂ້າຊ້າງທີ່ຜິດກົດໝາຍ; |
| NEAP | = National Elephant Action Plan - ແຜນດຳເນີນງານ ຊ້າງແຫ່ງຊາດ; |
| PAFO | = Provincial Agriculture and Forestry Office - ພະແນກ ກະສິກຳ ແລະ ປ່າໄມ້ ປະຈຳແຂວງ; |
| P-WEN | = Provincial Wildlife Law Enforcement Network - ເຄືອຂ່າຍບັງຄັບໃຊ້ກົດໝາຍ ກ່ຽວກັບສັດປ່າຂັ້ນແຂວງ; |
| WCS | = Wildlife Conservation Society - ອົງການອະນຸລັກສັດປ່າ; |
| WWF | = World Wild Fund for Nature - ອົງການອະນຸລັກທຳມະຊາດໂລກ. |

# ການອະທິບາຍຄຳສັບ

1. **ສັດລ້ຽງລູກດ້ວຍນ້ຳນົມ ໝາຍເຖິງ** ສັດນ້ຳ ແລະ ສັດປ່າທີ່ມີນົມ, ອອກລູກເປັນໂຕ ເຊັ່ນ: ປາຂ່າ, ຊ້າງ, ເສືອ, ລີງ, ເຈຍ, ຂະຍຸ ແລະ ສັດອື່ນໆ;
2. **ຊະນິດພັນ ໝາຍເຖິງ** ປະເພດສັດ ທີ່ມີຮູບຮ່າງ ແລະ ຄຸນລັກສະນະຄືກັນ ຊຶ່ງສາມາດ ປະສົມພັນ ແລະ ຂະຫຍາຍພັນໄດ້;
3. **ຖິ່ນທີ່ຢູ່ອາໄສຂອງ ສັດນ້ຳ ແລະ ສັດປ່າ ໝາຍເຖິງ** ບ່ອນດຳລົງຊີວິດ, ຂະຫຍາຍພັນ ຕາມທຳມະຊາດ ເຊັ່ນ: ປ່າໄມ້, ທົ່ງຫຍ້າ, ຖ້ຳ, ປຸ່ງ, ແມ່ນ້ຳ, ລຳເຊ, ຫ້ວຍ, ບຶງ, ໜອງ ຫຼື ດິນບໍລິເວນນ້ຳ;
4. **ການອະນຸລັກ ໝາຍເຖິງ** ການຮັກສາ ແລະ ນຳໃຊ້ ສັດນ້ຳ ແລະ ສັດປ່າ ໂດຍມີການຄຸ້ມຄອງ ຕາມລະບຽບ ຫຼັກການ ເພື່ອໃຫ້ມີໄວ້ຕະຫລອດໄປ ແລະ ສາມາດນຳໃຊ້ຢ່າງຍາວນານ;
5. **ການປົກປັກຮັກສາ ໝາຍເຖິງ** ການປ້ອງກັນ ສັດນ້ຳ ແລະ ສັດປ່າ ຢ່າງເຂັ້ມງວດ ເພື່ອບໍ່ໃຫ້ຖືກທຳລາຍ ແລະ ສູນຫາຍໄປ ຈາກທຳມະຊາດ;
6. **ເຂດອະນຸລັກພັນ ສັດນ້ຳ ແລະ ສັດປ່າ ໝາຍເຖິງ** ພື້ນທີ່ປ່າໄມ້, ທີ່ດິນປ່າໄມ້ ແລະ ແຫຼ່ງນ້ຳ ຊຶ່ງໄດ້ກຳນົດໃຫ້ ເປັນຖິ່ນທີ່ຢູ່ອາໄສຂອງ ສັດນ້ຳ ແລະ ສັດປ່າ ຊະນິດຕ່າງໆ ຕາມລະບຽບການ;
7. **ສົນທິສັນຍາ ໝາຍເຖິງ** ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນ ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນ-ພັນ ລະຫວ່າງຊາດ ຊຶ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີໃນວັນທີ 30 ພຶດສະພາ 2004;
8. **ສັດນ້ຳ ແລະ ສັດປ່າ ທຳມະຊາດ ປະເພດຫວງຫ້າມ ໝາຍເຖິງ** ສັດນ້ຳ ແລະ ສັດປ່າ ທີ່ໄດ້ກຳນົດໄວ້ ໃນບັນຊີ I ຊຶ່ງເປັນ ສັດ ທີ່ຫາຍາກ ແລະ ໃກ້ຈະສູນພັນ;
9. **ການລ່າສັດນ້ຳ ແລະ ສັດປ່າ ໝາຍເຖິງ** ການຫາ, ຈັບ, ຍິງ, ຂ້າ, ໂຫ່, ດັກ, ໄລ່ຕ້ອນ ຫຼື ວິທີການອື່ນໆ;
10. **ລະບົບນິເວດ ໝາຍເຖິງ** ສາຍພົວພັນລະຫວ່າງ ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ຄົງຕົວຢູ່ຕາມທຳມະຊາດ;
11. **ຊີວະນາໆພັນ ໝາຍເຖິງ** ຄວາມຫຼາກຫຼາຍຂອງລະບົບນິເວດ ຊະນິດ ແລະ ແນວພັນ ຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ຂອບເຂດທຳມະຊາດໜຶ່ງ

# ພາກທີ I ພາກສະເໜີ

## 1.1 ສະພາບລວມ

ສປປ ລາວ ຕັ້ງຢູ່ທິດຕາເວັນອອກສ່ຽງໃຕ້ຂອງທະວີບອາຊີ, ຢູ່ໃຈກາງຂອງແຫຼມອິນດູຈີນ, ມີເນື້ອທີ່ທັງໝົດ 236.800 ກິໂລຕາແມັດ. ເປັນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ ແລະ ມີຊາຍແດນຕິດກັບ 05 ປະເທດ ຄື: ທິດເໜືອ ຕິດກັບ ສປ ຈີນ, ທິດຕາເວັນອອກ ຕິດກັບ ສສ ຫວຽດນາມ, ທິດໃຕ້ ຕິດກັບ ລາຊະອານາຈັກກຳປູເຈຍ, ທິດຕາເວັນຕົກ ຕິດກັບ ລາຊະອານາຈັກໄທ ແລະ ທິດຕາເວັນຕົກສ່ຽງເໜືອ ຕິດກັບ ສະຫະພາບ ມຽນມ້າ, ມີພົນລະເມືອງ ທັງໝົດ 7.123.000 ຄົນ, ຄວາມໜາແໜ້ນ ຂອງພົນລະເມືອງ ສະເລ່ຍ 26.7 ຄົນ/ກິໂລຕາແມັດ (ສູນສະຖິຕິແຫ່ງຊາດ, 2019).




*ຮູບພາບທີ 1 ແຜນທີ່ ຂອບເຂດປະເທດລາວ © LaosCountry*

ລັດຖະບານ ກຳນົດເນື້ອທີ່ດິນປ່າໄມ້ 16.5 ລ້ານ ເຮັກຕາ ແລະ ແບ່ງອອກເປັນສາມປະເພດປ່າ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຄື: ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ. ໃນນັ້ນ ປ່າສະຫງວນແຫ່ງຊາດ 25 ແຫ່ງ ມີເນື້ອທີ່ 3.8 ລ້ານເຮັກຕາ, ປ່າປ້ອງກັນແຫ່ງຊາດ 49 ແຫ່ງ ມີເນື້ອທີ່ 4.7 ລ້ານເຮັກຕາ ແລະ ປ່າຜະລິດ 59 ແຫ່ງ ມີເນື້ອທີ່ 3.1 ລ້ານເຮັກຕາ, ມີອັດຕາການປົກຫຸ້ມຂອງປ່າໄມ້ 62% (ຂໍ້ມູນ 2019) ແລະ ເປັນປະເທດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ປ່າໄມ້ປຽບເໝືອນກັບຄຳຂຽວ ທີ່ປົກຄຸມໄປທົ່ວຜືນແຜ່ນດິນ ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນທີ່ເປັນເອກະລັກ ໃນຈຸດໃຈກາງຂອງແຫຼມອິນດູຈີນ. ດ້ວຍຄຸນລັກສະນະທີ່ຕັ້ງທາງພູມມີສາດ ສປປ ລາວ ຈຶ່ງກາຍເປັນແຫຼ່ງຖິ່ນທີ່ຢູ່ອາໄສສຳຄັນຂອງ ສັດນ້ຳ ແລະ ສັດປ່ານາໆຊະນິດ ຊຶ່ງໃນນັ້ນມີບາງຊະນິດກໍ່ມີຢູ່ສະເພາະ ໃນ ສປປ ລາວ ແຫ່ງດຽວໃນໂລກເທົ່ານັ້ນ.

ໃນປະຈຸບັນ ຢູ່ໃນໂລກມີຊ້າງ 02 ຊະນິດ ຄື: ຊ້າງອາຟຣິກາ (Loxodonta africana) ແລະ ຊ້າງອາຊີ (Elephas maximus) ສຳລັບ ຊ້າງອາຊີ ແມ່ນກະຈາຍຢູ່ 13 ປະເທດ ໃນທະວີບອາຊີ. ຊ້າງ ແມ່ນສັດປ່າ ທີ່ມະນຸດໄດ້ນຳມາລ້ຽງ ແລະ ນຳໃຊ້ ເຂົ້າໃນການດຳລົງຊີວິດຂອງ ປະຊາຊົນບັນດາເຜົ່າມາໄດ້ຫຼາຍສັດຕະວັດ, ເປັນສັດກິນພືດທີ່ມີຂະໜາດໃຫຍ່ ມີພື້ນທີ່ຫາກິນກວ້າງຂວາງ ແລະ ກວມເອົາພື້ນທີ່ ສາມປະເພດປ່າທີ່ຕຶບໜາ ແລະ ເປັນສັດປະຈຳຊາດ ຂອງ ສປປ ລາວ ຊຶ່ງສະແດງໃຫ້ເຫັນເຖິງວິຖີ ການດຳລົງຊີວິດ, ຮີດຄອງປະເພນີທີ່ຕິດພັນກັບຄວາມເຊື່ອຖືທີ່ຄົນເຮົານັບຖື, ມີບົດບາດສຳຄັນໃນການຮັກສາລະບົບນິເວດວິທະຍາປ່າໄມ້ທຳມະຊາດ, ມີຄຸນຄ່າສູງຕໍ່ການພັດທະນາເສດຖະກິດ - ສັງຄົມ, ວັດທະນະທຳ, ສິ່ງແວດລ້ອມ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ໄດ້ພົບເຫັນຊ້າງກະແຈກກະຈາຍໄປທົ່ວປະເທດ. ຊ້າງແມ່ນສັດປ່າ ທີ່ຈັດເຂົ້າໃນປະເພດສັດຫວງຫ້າມ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ເປັນສັດປ່າທີ່ມີຄວາມສຳຄັນສູງ, ຫາຍາກ ແລະ ໃກ້ຈະສູນພັນ ແລະ ກຳນົດໃນຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 08/ນຍ, ລົງວັນ ທີ 25 ກຸມພາ 2021 ວ່າດ້ວຍການຮັບຮອງເອົາບັນຊີສັດນ້ຳ ແລະ

ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I ແລະ ປະເພດ ຄຸ້ມຄອງ ຫຼື ບັນຊີ II. ຊ້າງແມ່ນນອນໃນ ບັນຊີ I ຂອງສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES, 2013) ທີ່ ສປປ ລາວ ເປັນພາຄີ ໃນວັນທີ 30 ພຶດສະພາ 2004 ແລະ ເປັນຊະນິດພັນສັດທີ່ໃກ້ຈະສູນພັນ ໃນບັນຊີແດງ (Endangered) ຂອງອົງການອະນຸລັກທຳມະຊາດສາກົນ (IUCN, 2008) ຊຶ່ງຕ້ອງໄດ້ຮັບການຄຸ້ມຄອງ, ກວດກາ, ອະນຸລັກ ແລະ ປົກປັກຮັກສາ ໃຫ້ຢູ່ຄຽງຄູ່ກັບ ສປປ ລາວ.




*ຮູບພາບທີ 2 ບົດບາດຂອງຊ້າງ ທີ່ມີສ່ວນຮ່ວມໃນ ກິດຈະກຳຮີດຄອງປະເພນີຂອງລາວ*

ປະຈຸບັນ ຊ້າງປ່າ ຢູ່ໃນ ສປປ ລາວ ມີຈຳນວນ 300 ຫາ 400 ໂຕ (ກົມປ່າໄມ້, 2020) ອາໄສຢູ່ໃນພື້ນທີ່ປ່າປະສົມ, ປ່າດົງດິບປະສົມ, ປ່າໂຄກປະສົມ ທີ່ນອນຢູ່ໃນ ແລະ ນອກ 03 ປະເພດປ່າ ຊຶ່ງກະຈາຍເປັນອານາເຂດກວ້າງໃນທົ່ວທຸກພາກ ຂອງ ສປປ ລາວ ມີຢູ່ 14 ແຂວງ ຄື: (01) ແຂວງຜົ້ງສາລີ (ເຂດປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ); (02) ແຂວງອຸດົມໄຊ (ພູແທ່ນ), (3) ແຂວງຫຼວງນ້ຳທາ (ເຂດປ່າສະຫງວນແຫ່ງຊາດນ້ຳຫ້າ); (04) ແຂວງຫົວພັນ (ເຂດປ່າສະຫງວນແຫ່ງຊາດນ້ຳຊຳ ແລະ ເຂດອຸທິຍານແຫ່ງຊາດນ້ຳແອັດ-ພູເລີຍ); (05) ແຂວງໄຊຍະບູລີ (ເຂດປ່າສະຫງວນແຫ່ງຊາດນ້ຳປຸຍ); (06) ແຂວງວຽງຈັນ (ເຂດເມືອງຊະນະຄາມ, ເມືອງເຟືອງ); (07) ນະຄອນຫຼວງວຽງຈັນ (ເຂດປ່າສະຫງວນແຫ່ງຊາດພູພະນັງ); (08) ແຂວງບໍລິຄຳໄຊ (ເຂດປ່າສະຫງວນແຫ່ງຊາດນ້ຳກະດິງ ແລະ ປ່າປ້ອງກັນຂອງແຂວງເຂດພູງູ); (09) ແຂວງຄຳມ່ວນ (ເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ເມືອງຄູນຄຳ ແລະ ເຂດເມືອງບົວລະພາ); (10) ແຂວງສະຫວັນນະເຂດ (ເຂດປ່າສະຫງວນແຫ່ງຊາດພູຊ້າງແຮ່ ແລະ ເຂດປ່າສະຫງວນແຫ່ງຊາດ ດົງພູວຽງ); (11) ແຂວງສາລາວັນ (ເຂດປ່າສະຫງວນແຫ່ງຊາດເຊບັ້ງນວນ); (12) ແຂວງຈຳປາສັກ (ເຂດປ່າປ້ອງກັນດົງຄັນທຸງ, ເມືອງປາກຊ່ອງ); (13) ແຂວງເຊກອງ (ເມືອງກະລຶມ ແລະ ເຂດສາຍພູຫຼວງເຊື່ອມຕໍ່ເມືອງປາກຊ່ອງ); (14) ແຂວງອັດຕະປື (ເຂດປ່າສະຫງວນແຫ່ງຊາດດົງອຳພາມ ແລະ ເຂດປ່າປ້ອງກັນແຫ່ງຊາດນ້ຳກົງ).

ປະຊາກອນ ຊ້າງລ້ຽງ ໃນປະຈຸບັນ ມີຈຳນວນ 464 ໂຕ, ຢູ່ ແຂວງ ໄຊຍະບູລີ ຈຳນວນ 381 ໂຕ, ແຂວງຫລວງພະບາງ 21 ໂຕ, ແຂວງ ອຸດົມໄຊ ຈຳນວນ 06 ໂຕ, ບໍ່ແກ້ວ 7 ໂຕ, ແຂວງ ວຽງຈັນ ຈຳນວນ 05 ໂຕ, ແຂວງບໍລິຄຳໄຊ 01 ໂຕ, ແຂວງ ສາລະວັນ ຈຳນວນ 03 ໂຕ, ແຂວງ ຈຳປາສັກ ຈຳນວນ 27 ໂຕ ແລະ ນະຄອນຫລວງວຽງຈັນ 13 ໂຕ (ກົມລ້ຽງສັດ ແລະ ການປະມົງ, 2020).




*ຮູບພາບທີ 3 ການກະຈາຍຂອງຊ້າງປ່າໃນ ສປປ ລາວ*

### 1.2 ການຄຸ້ມຄອງປະຊາກອນຊ້າງ

ລັດຖະບານ ໄດ້ສ້າງຕັ້ງ ປ່າສະຫງວນແຫ່ງຊາດ 25 ແຫ່ງ ເພື່ອຄຸ້ມຄອງ, ປົກປັກຮັກສາ ຊີວະນາໆພັນ ໂດຍສະເພາະ ສັດປ່າທີ່ຫາຍາກ ແລະ ໃກ້ຈະສູນພັນ. ໃນນັ້ນ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນແຫ່ງນ້ຳປຸຍ ໄດ້ກຳນົດເປັນພື້ນທີ່ ກວດກາ ແລະ ຕິດຕາມການລັກລອບລ່າ-ຂ້າຊ້າງທີ່ຜິດກົດໝາຍ (MIKE) ຂອງອົງການ IUCN ແຕ່ປີ 2010 ເປັນຕົ້ນມາ.

ລັດຖະບານ ກໍ່ຄືກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະຕ່າງປະເທດ ໂດຍສະເພາະອົງການປົກຄອງທ້ອງຖິ່ນ ແລະ ຕະຫຼອດຮອດ ພໍ່ແມ່ປະຊາຊົນ ເພື່ອມີສ່ວນຮ່ວມ ໃນການຄຸ້ມຄອງ, ປົກປັກຮັກສາ, ກວດກາ ແລະ ອະນຸລັກຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ ໃຫ້ມີຄວາມຍືນຍົງ ດ້ວຍການສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຫຼາຍສະບັບ ຄື:

1) ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007 ໄດ້ກຳນົດກ່ຽວກັບບັນຊີສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ, ປະເພດຄຸ້ມຄອງ ແລະ ປະເພດຄຸ້ມຄອງທົ່ວໄປ;
2) ກົດໝາຍ ວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ໄດ້ກຳນົດນະໂຍບາຍ ກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ໂດຍສະເພາະການກຳນົດຈັດສັນເຂດຄຸ້ມຄອງປ່າໄມ້ ເພື່ອເປັນເຂດອະນຸລັກຊີວະນາໆພັນ ແລະ ຖິ່ນທີ່ຢູ່ອາໄສຂອງສັດປ່າ;
3) ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການສັດຕະວະແພດ ເພື່ອພັດທະນາ ການລ້ຽງສັດ, ການຮັກສາສຸຂະພາບສັດ, ການປົກປັກຮັກສາກຳມະພັນ ແລະ ຊັບພະຍາກອນສັດ, ສະຫວັດດີການສັດ ແລະ ຄວາມປອດໄພທາງດ້ານອາຫານ ແນໃສ່ເພີ່ມປະລິມານ, ຍົກສູງຄຸນນະພາບຂອງຜະລິດຕະພັນສັດ ແລະ ຜະລິດເປັນສິນຄ້າ, ປົກປັກຮັກສາສິ່ງແວດລ້ອມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະການຜະລິດເປັນສິນຄ້າຕາມທິດກະສິກຳ ສີຂຽວ, ສະອາດ ແລະ ຍືນຍົງ;
4) ດຳລັດ ວ່າດ້ວຍ ການສ້າງຕັ້ງປ່າສະຫງວນແຫ່ງຊາດ ສະບັບເລກທີ 164/ນຍ, ລົງ ວັນທີ 29 ຕຸລາ 1993 ໄດ້ກຳນົດກ່ຽວກັບການສ້າງຕັ້ງປ່າສະຫງວນແຫ່ງຊາດ 18 ແຫ່ງ. ໃນນັ້ນ, ປີ 1996 ໄດ້ປະກາດ 02 ແຫ່ງ ປີ 2012 ໄດ້ປະກາດ 04 ແຫ່ງ ແລະ ປີ 2020 ໄດ້ປະກາດ 01 ແຫ່ງ ລວມທັງໝົດມີ 25 ແຫ່ງ;
5) ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ສະບັບລົງລາຍເຊັນ ວັນທີ 23 ມີນາ 1973 ແລະ ດັດແກ້ ໃນວັນທີ 22 ມິຖຸນາ 1979. ສປປ ລາວ ໄດ້ເຂົ້າເປັນພາຄີ ໃນວັນທີ 30 ພຶດສະພາ 2004 ໄດ້ກຳນົດບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ (ບັນຊີ I, II, III) ໂດຍສະເພາະປະເພດຫວງຫ້າມ ບັນຊີ I ຊຶ່ງລວມທັງ ຊ້າງອາຊີ ເພື່ອຄຸ້ມຄອງໃນການຄ້າຂາຍບັນດາຊະນິດພັນ ລວມທັງຊິ້ນສ່ວນ ແລະ ຜະລິດຕະພັນຕ່າງໆ;
6) ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;

7) ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດໍາເນີນງານ ເພື່ອສະກັດກັ້ນ ແລະ ຕ້ານອາຊະຍະກໍາສັດນໍ້າ ແລະ ສັດປ່າ ຂອງ ສປປ ລາວ ແຕ່ນີ້ຮອດປີ 2025 ສະບັບເລກທີ 0654/ກປ, ລົງວັນທີ 30 ມີນາ 2018 ແມ່ນຜັນຂະຫຍາຍກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ໃຫ້ເປັນອັນລະອຽດ ແລະ ລົງເລິກຂັ້ນຕອນ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດຕົວຈິງ ຊຶ່ງແມ່ນໜ້າທີ່ຄວາມຮັບຜິດຊອບລວມຂອງເຄືອຄ່າຍການບັງຄັບໃຊ້ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ;
8) ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການຂຶ້ນທະບຽນພົມສັດ ສະບັບເລກທີ 1974/ກປ, ລົງວັນທີ 23 ສິງຫາ 2012 ແມ່ນເພື່ອກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດກ່ຽວກັບການຂຶ້ນທະບຽນພົມສັດ ຢູ່ ສປປ ລາວ ເພື່ອເກັບກໍາສະຖິຕິສັດໃຫ້ມີຄວາມລະອຽດຊັດເຈນ, ສ້າງເງື່ອນໄຂການຄຸ້ມຄອງຝູງສັດ ແລະ ການດຸ່ນດ່ຽງຝູງສັດ, ແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ລ້ຽງສັດ ແລະ ອໍານວຍຄວາມສະດວກໃຫ້ແກ່ການຕິດຕາມ, ການກວດການອບໂອນກໍາມະສິດ, ການຊື້ຂາຍ, ການແລກປ່ຽນ ຕະຫຼອດຮອດການເຄື່ອນຍ້າຍສັດພາຍໃນປະເທດ ແລະ ສົ່ງອອກໄປຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;
9) ແຜນດໍາເນີນງານງາຊ້າງແຫ່ງຊາດ ກະຊວງກະສິກໍາ ແລະ ປ່າໄມ້ ມິຖຸນາ 2020 ແຜນດໍາເນີນງານດັ່ງກ່າວແມ່ນເປັນການຜັນຂະຫຍາຍກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ແລະ ເພື່ອປະຕິບັດຕາມສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ.

## 1.3 ການຮ່ວມມື

### 1.3.1 ການຮ່ວມມືພາຍໃນ

ການຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາຊ້າງ ແມ່ນໄດ້ມີການຮ່ວມມືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະການຈັດຕັ້ງປະຕິບັດວຽກງານຕົວຈິງ ແມ່ນຂະແໜງການທີ່ກ່ຽວຂ້ອງ ຂອງແຂວງ, ເມືອງ, ບ້ານ ແລະ ປະຊາຊົນ, ນອກຈາກນັ້ນ ຍັງໄດ້ຮ່ວມມືກັບບັນດາອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນປະຈໍາ ສປປ ລາວ.

### 1.3.2 ການຮ່ວມມືພາກພື້ນ ແລະ ສາກົນ

ການອະນຸລັກປະຊາກອນຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ ແມ່ນໄດ້ມີການຮ່ວມມືກັບພາກພື້ນ ແລະ ສາກົນ ໂດຍສະເພາະບັນດາປະເທດທີ່ມີຊາຍແດນຕິດກັບ ສປປ ລາວ, ບັນດາປະເທດທີ່ມີຊ້າງອາຊີ ແລະ ບັນດາອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະ ແມ່ນ ອົງການກວດກາຕິດຕາມ ການຂ້າຊ້າງ ທີ່ຜິດກົດໝາຍ (MIKE), ສົນທິສັນຍາສາກົນວ່າດ້ວຍການຄ້າສັດປ່າ ແລະພືດປ່າທີ່ໃກ້ຈະສູນພັນ (CITES), ສະຫະພັນສາກົນເພື່ອການອະນຸລັກສັດປ່ານາໆຊາດ (IUCN SSC) ກຸ່ມອະນຸລັກຊ້າງອາຊີ (AsESG) ເພື່ອສະໜັບສະໜູນດ້ານງົບປະມານ ແລະ ເຕັກນິກວິຊາການ.

# ພາກທີ II ໄພຂົ່ມຂູ່ ແລະ ສິ່ງທ້າທາຍ

## 2.1 ໄພຂົ່ມຂູ່ ຕໍ່ປະຊາກອນຊ້າງ

ໃນໄລຍະຜ່ານມາ ເຖິງວ່າ ລັດຖະບານ ໄດ້ເອົາໃຈໃສ່ໃນການຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາຊ້າງ ໂດຍອອກກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຫຼາຍປານໃດກໍຕາມ, ແຕ່ກໍຍັງມີການລັກລອບຂ້າ ແລະ ລ່າຊ້າງ, ມີການທຳລາຍແຫຼ່ງທີ່ຢູ່ອາໃສຂອງພວກມັນ ເປັນຕົ້ນແມ່ນ ການພັດທະນາການກໍ່ສ້າງພື້ນຖານໂຄງລ່າງ ໃນເຂດພື້ນທີ່ຖິ່ນຢູ່ອາໃສຂອງຊ້າງປ່າ ແລ ຊ້າງບ້ານ ເຮັດໃຫ້ຊ້າງປ່າສູນເສຍຖິ່ນທີ່ຢູ່ອາໄສ.

### 2.1.1 ການຂ້າ ແລະ ລ່າຊ້າງ

ການຂ້າ ແລະ ລ່າຊ້າງ ແມ່ນ ການຂ້າເອົາງາ ແລະ ຊິ້ນສ່ວນຕ່າງໆຂອງຊ້າງ ເພື່ອການຄ້າ ແລະ ການບໍລິໂພກໂດຍເຈດຕະນາ ຫຼື ຈິງໃຈ, ແຕ່ບາງກໍລະນີ ການຂ້າ ແລະ ລ່າຊ້າງ ໂດຍບໍ່ເຈດຕະນາ ຫຼື ບໍ່ຈິງໃຈນັ້ນ ແມ່ນເກີດຂຶ້ນໃນເວລາທີ່ມີຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ເພື່ອປ້ອງກັນຊີວິດ ແລະ ຊັບສິນ ຂອງປະຊາຊົນ. ດັ່ງນັ້ນ, ຈຶ່ງເປັນສາເຫດເຮັດໃຫ້ຊ້າງຕາຍໃນທົ່ວປະເທດ (ສະຖິຕິ ປີ 1985 ເຖິງປະຈຸບັນ ມີຊ້າງຕາຍທັງໝົດ ຈຳນວນ 133 ໂຕ ສະເລ່ຍ 2 ຫາ 5 ໂຕ/ປີ) ດັ່ງຕາຕະລາງ ລຸ່ມນີ້:




ຮູບພາບທີ 4 ສະຖິຕິ ແລະ ພື້ນທີ່ ຊ້າງປ່າຖືກຂ້າຕາຍໃນແຕ່ລະປີ

| ລ/ດ | ແຂວງ | ຈຳນວນໂຕ |
|---|---|---|
| 1 | ຜົ້ງສາລີ | 2 |
| 2 | ຫຼວງນ້ຳທາ | 5 |
| 3 | ຫົວພັນ | 9 |
| 4 | ອຸດົມໄຊ | 3 |
| 5 | ໄຊຍະບູລີ | 27 |
| 6 | ວຽງຈັນ | 13 |
| 7 | ນະຄອນຫຼວງ | 1 |
| 8 | ບໍລິຄຳໄຊ | 15 |
| 9 | ຄຳມ່ວນ | 34 |
| 10 | ສະຫວັນນະເຂດ | 12 |
| 11 | ສາລະວັນ | 2 |
| 12 | ຈຳປາສັກ | 1 |
| 13 | ເຊກອງ | 3 |
| 14 | ອັດຕະປື | 6 |
| ລວມ | | 133 |

ຕາຕະລາງ 1 ສັງລວມຊ້າງປ່າຖືກຂ້າຕາຍ ແຕ່ປີ 1985 ຫາ 2020

### 2.1.2 ການກໍ່ສ້າງພື້ນຖານໂຄງລ່າງ

ການກໍ່ສ້າງພື້ນຖານໂຄງລ່າງ ແມ່ນເປັນບັນຫາໜຶ່ງທີ່ເຮັດໃຫ້ຊ້າງປ່າ ໄດ້ສູນເສຍຖິ່ນທີ່ຢູ່ອາໄສ ຍ້ອນການບຸກລຸກພື້ນທີ່ ແລະ ການຫັນປ່ຽນປ່າໄມ້, ທີ່ດິນປ່າໄມ້ ໄປເປັນພື້ນທີ່ອື່ນ ເຊັ່ນ: ການສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່, ຖະໜົນຫົນທາງ, ແລວສາຍໄຟ, ເຂດທຳການຜະລິດ ແລະ ການຕັ້ງຖິ່ນທີ່ຢູ່ອາໄສຂອງປະຊາຊົນ ເປັນຕົ້ນ ທັງໝົດນີ້ເຮັດໃຫ້ພື້ນທີ່ການດຳລົງຊີວິດ ແລະ ຫາກິນຂອງຊ້າງ ແມ່ນແຄບ, ນ້ອຍລົງ ແລະ ຕັດແບ່ງເປັນຫຼາຍຕອນ.

## 2.2 ສິ່ງທ້າທາຍຕໍ່ການຄຸ້ມຄອງປະຊາກອນຊ້າງ

ການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ ຢູ່ໃນ ສປປ ລາວ ແມ່ນອາໄສການມີສ່ວນຮ່ວມ ແລະ ການສະໜັບສະໜູນຈາກຫຼາຍພາກສ່ວນ ທາງດ້ານງົບປະມານ ແລະ ເຕັກນິກວິຊາການ ຊຶ່ງຜ່ານມາຍັງບໍ່ພຽງພໍຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເຮັດໃຫ້ເກີດມີສິ່ງທ້າທາຍຫຼາຍຢ່າງ ຖ້າທຽບໃສ່ປະຈຸບັນ ມີ 05 ບັນຫາຫຼັກ ຕ້ອງໄດ້ເອົາໃຈໃສ່ໃນການແກ້ໄຂຢ່າງຮີບດ່ວນ ຄື: ❶ ຂໍ້ມູນໃນການຄຸ້ມຄອງຊ້າງປ່າ, ❷ ການສ້າງຄວາມເຂັ້ມແຂງຂອງພະນັກງານ, ❸ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າຖືກທຳລາຍ, ❹ຂໍ້ຂັດແຍ່ງລະຫວ່າງ ຄົນກັບຊ້າງປ່າ, ❺ການໂຄສະນາເຜີຍແຜ່, ແລະ ການມີ ສ່ວນຮ່ວມ.

### 2.2.1 ຂໍ້ມູນໃນການຄຸ້ມຄອງຊ້າງ

ໃນໄລຍະຜ່ານມາ ອົງການ WWF ແລະ ອະນຸລັກສັດປ່າ WCS ໄດ້ສະໜັບສະໜູນ ໃນການຄຸ້ມຄອງປະຊາກອນຊ້າງໃນເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນແຫ່ງຊາດນ້ຳປຸຍ ໂດຍສະເພາະແມ່ນການສຳຫຼວດປະຊາກອນຊ້າງ ຊຶ່ງເປັນຂໍ້ມູນສະເພາະບາງເຂດເທົ່ານັ້ນ ແລະ ໂຄງການ ELEFANTSIA ແມ່ນໄດ້ຊຸກຍູ້ການຂຶ້ນທະບຽນຊ້າງ ແລະ ຮັກສາສຸຂະພາບຊ້າງບ້ານ, ແຕ່ຍັງບໍ່ພຽງພໍສຳລັບ ວຽກງານ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ແລະ ຊ້າງບ້ານ ໃນຂອບເຂດທົ່ວປະເທດ ແລະ ການສຶກສາຂໍ້ມູນກ່ຽວກັບພຶດຕິກຳຂອງຊ້າງ ເຮັດໃຫ້ການສຶກສາຄົ້ນຄວ້າລະບົບນິເວດຂອງຊ້າງປ່າ-ຊ້າງບ້ານ ໃນຂອບເຂດທົ່ວປະເທດ ແລະ ການສຶກສາຂໍ້ມູນກ່ຽວກັບພຶດຕິກຳຂອງຊ້າງ ເຮັດໃຫ້ການສຶກສາຄົ້ນຄວ້າລະບົບນິເວດຂອງຊ້າງປ່າ ແມ່ນບໍ່ມີຂໍ້ມູນທີ່ຕິດພັນກັບກິດຈະກຳການອະນຸລັກຊ້າງ, ຂໍ້ມູນພາກສະໜາມ, ຂໍ້ມູນທາງດ້ານວິທະຍາສາດ, ຂໍ້ມູນທາງດ້ານສັງຄົມ ແລະ ການວິເຄາະຕ່າງໆ ຂາດວິທີການ ແລະ ເຕັກນິກ ເປັນຕົ້ນ: ການນຳໃຊ້ລະບົບສັນຍານວິທະຍຸ ແລະ ສັນຍານດາວທຽມ ເພື່ອຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງຊ້າງ. ສະນັ້ນ, ຈຶ່ງມີຄວາມຕ້ອງການຫຼາຍຢ່າງ ເພື່ອບັນລຸເປົ້າໝາຍ ເປັນຕົ້ນແມ່ນ ການແລກປ່ຽນບົດຮຽນ ກ່ຽວກັບ ການຄຸ້ມຄອງປະຊາກອນຊ້າງ ລວມທັງການປົກປັກຮັກສາສິ່ງແວດລ້ອມ, ການສ້າງຄວາມເຂັ້ມແຂງໃຫ້ພາກສ່ວນທີ່ກ່ຽວຂ້ອງໃຫ້ມີສ່ວນຮ່ວມໃນການປະຕິບັດວຽກງານ ແມ່ນຍັງບໍ່ທັນພຽງພໍ.

### 2.2.2 ຖິ່ນທີ່ຢູ່ອາໄສຂອງຊ້າງຖືກທຳລາຍ

ໃນແຕ່ລະປີ ຄວາມອຸດົມສົມບູນຂອງປ່າໄມ້ໃນ ສປປ ລາວ ແມ່ນໄດ້ຫຼຸດລົງ ຍ້ອນມີການບຸກລຸກພື້ນທີ່ ແລະ ການຫັນປ່ຽນປ່າໄມ້, ທີ່ດິນປ່າໄມ້ໄປເປັນພື້ນທີ່ອື່ນ ໂດຍສະເພາະການກໍ່ສ້າງພື້ນຖານໂຄງລ່າງ, ການຂະຫຍາຍເນື້ອທີ່ການຜະລິດກະສິກຳ, ການວາງແຜນນຳໃຊ້ທີ່ດິນ, ການບຸກລຸກຈັບຈອງທີ່ດິນ, ການຖາງປ່າເຮັດໄຮ່ ແລະ ອື່ນໆ. ການຄຸ້ມຄອງປ່າໄມ້ ຍັງມີຂໍ້ຈຳກັດທາງດ້ານງົບປະມານ, ເຕັກນິກວິຊາການ ແລະ ບຸກຄະລາກອນ ຜູ້ຮັບຜິດ ຊອບວຽກງານປ່າໄມ້ ໂດຍສະເພາະການປັບປຸງການຈັດຕັ້ງ ແລະ ການສັບຊ້ອນບັນຈຸພະນັກງານ ສ່ວນໃຫຍ່ແມ່ນ ເຮັດໄດ້ຢູ່ໃນລະດັບ ສູນກາງ ແລະ ແຂວງ. ສ່ວນລະດັບເມືອງ ແລະ ພາກສະໜາມ ປະຈຳແຕ່ລະເຂດ ແມ່ນຍັງເຮັດບໍ່ທັນໄດ້, ຂາດພະນັກງານປະຈຳປ່າ, ການສ້າງ ແລະ ປັບປຸງ ນະໂຍບາຍ, ນິຕິກຳ ກ່ຽວກັບ ວຽກງານຄຸ້ມຄອງປ່າໄມ້, ຄຸ້ມຄອງສັດນ້ຳ ແລະ ສັດປ່າ ຍັງບໍ່ທັນຄົບຊຸດ, ຄວາມເປັນເຈົ້າການໃນການມີສ່ວນຮ່ວມຄຸ້ມຄອງປ່າໄມ້ ຍັງບໍ່ທັນສູງ ເຮັດໃຫ້ມີການບຸກລຸກພື້ນທີ່ປ່າໄມ້.

### 2.2.3 ຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ

ບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ໄດ້ເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ ຕົ້ນຕໍແມ່ນ ພື້ນທີ່ຖິ່ນຢູ່ອາໄສຂອງຊ້າງ ໄດ້ຖືກສູນເສຍ ແລະ ຂາດແຫຼ່ງອາຫານ ເຮັດໃຫ້ຊ້າງອອກມາທຳລາຍ ຊັບສິນ, ພືນລະປູກຂອງປະຊາຊົນ ແລະ ໄດ້ທຳຮ້າຍປະຊາຊົນ ເຮັດໃຫ້ໄດ້ຮັບບາດເຈັບ, ເສຍຊີວິດໃນແຕ່ລະປີ. ຊຶ່ງສະແດງໃຫ້ເຫັນໃນຕາຕະລາງ 2 ແລະ 3 ດັ່ງລຸ່ມນີ້:

| ຂໍ້ມູນ ຊ້າງປ່າຂ້າຄົນຕາຍ ແຕ່ປີ 2000 ຫາ 2021 | | | |
|---|---|---|---|
| ລ/ດ | ແຂວງ | ຈຳນວນຄົນ | ປີ |
| 1 | ຜົ້ງສາລີ | 2 | 2017 |
| 2 | ຫຼວງນໍ້າທາ | 1 | 2006 |
| 3 | ອຸດົມໄຊ | 1 | 2014 |
| 4 | ໄຊຍະບູລີ | 5 | 2015: 2016: 2017 |
| 5 | ວຽງຈັນ | 3 | 2005 |
| 6 | ນະຄອນຫຼວງວຽງຈັນ | 1 | 2019 |
| 7 | ບໍລິຄຳໄຊ | 2 | 2003;2013 |
| 8 | ຄຳມ່ວນ | 4 | 2000;2001;2020 |
| 9 | ສະຫວັນນະເຂດ | 3 | 2014: 2015: 2016 |
| ລວມ | | 22 | |

*ຕາຕະລາງ 2 ສັງລວມຊ້າງປ່າຂ້າຄົນຕາຍໃນແຕ່ລະປີ*

| ຈຳນວນ ບ້ານທີ່ມີບັນຫາຂໍ້ຂັດແຍ່ງລະຫວ່າງ ຄົນກັບຊ້າງປ່າ ໃນທົ່ວປະເທດ ປີ 2021 | | |
|---|---|---|
| ລ/ດ | ແຂວງ | ຈຳນວນ ບ້ານ |
| 1 | ຜົ້ງສາລີ | 40 |
| 2 | ອຸດົມໄຊ | 10 |
| 3 | ຫຼວງນໍ້າທາ | 6 |
| 4 | ຫົວພັນ | 6 |
| 5 | ໄຊຍະບູລີ | 19 |
| 6 | ວຽງຈັນ | 5 |
| 7 | ນະຄອນຫຼວງ | 3 |
| 8 | ບໍລິຄຳໄຊ | 10 |
| 9 | ຄຳມ່ວນ | 54 |
| 10 | ສະຫວັນນະເຂດ | 46 |
| 11 | ຈຳປາສັກ | 10 |
| 12 | ເຊກອງ | 10 |
| 13 | ສາລະວັນ | 3 |
| 14 | ອັດຕະປື | 12 |
| ລວມ | | 234 |

*ຕາຕະລາງ 3 ສັງລວມຈຳນວນບ້ານທີ່ມີຂໍ້ຂັດແຍ່ງ ລະຫວ່າງຄົນກັບຊ້າງໃນແຕ່ລະປີ*

### 2.2.4 ການໂຄສະນາເຜີຍແຜ່

ການໂຄສະນາເຜີຍແຜ່ ເພື່ອປູກຈິດສຳນຶກກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ສັດນໍ້າ - ສັດປ່າ ໃຫ້ປະຊາຊົນຫຼາຍປານໃດກໍຕາມ ແຕ່ກໍ່ຍັງບໍ່ທົ່ວເຖິງເທົ່າທີ່ຄວນ ໂດຍສະເພາະແມ່ນຢູ່ໃນ ບັນດາບ້ານ, ກຸ່ມບ້ານ ແລະ ພໍ່ແມ່ປະຊາຊົນ ທີ່ດຳລົງຊີວິດຕິດພັນກັບປ່າໄມ້ ເຮັດໃຫ້ເກີດມີຊ່ອງວ່າງໃນການບຸກລຸກທຳລາຍປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ສັດນໍ້າ - ສັດປ່າ. ສະນັ້ນ, ການໂຄສະນາເຜີຍແຜ່ ເພື່ອປູກຈິດສຳນຶກ ຈຶ່ງເປັນບັນຫາສຳຄັນ ແລະ ຄວນໄດ້ຮັບການເອົາໃຈໃສ່ເປັນຕົ້ນຕໍ ໃນການກຳນົດໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ສ້າງກົນໄກ ແລະ ວິທີການ ໃນການໂຄສະນາເຜີຍແຜ່ ໃຫ້ແກ່ຊຸມຊົນໃນທ້ອງຖິ່ນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນ ທັງເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງປ່າ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ.

### 2.2.5 ການມີສ່ວນຮ່ວມ

ເພື່ອໃຫ້ວຽກງານການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ແກ້ໄຂບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ແມ່ນພັນທະຂອງທຸກພາກສ່ວນ ນັບແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ ລວມເຖິງ ສະຖາບັນການສຶກສາ, ຜູ້ປະກອບການທຸລະກິດທີ່ກ່ຽວຂ້ອງ, ບັນດາອົງການຈັດຕັ້ງສາກົນ, ບັນດາປະເທດພາກພື້ນ ແລະ ບັນດາປະເທດໃກ້ຄຽງ ທີ່ມີຊາຍແດນຕິດຈອດກັນ ຕ້ອງໄດ້ມີການຮ່ວມມື, ປະສານສົມທົບ ແລະ ເປັນເຈົ້າການ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ.

## 2.3 ການວິເຄາະ ແລະ ກຳນົດບັນຫາ

ການກຳນົດໄພຂົ່ມຂູ່ຕໍ່ປະຊາກອນຊ້າງອາຊີ ແລະ ສິ່ງທ້າທາຍຕໍ່ການອະນຸລັກຊ້າງ ມີຂັ້ນຕອນການວິເຄາະບັນຫາ, ຂໍ້ມູນໄພຂົ່ມຂູ່ ແລະ ສິ່ງທ້າທາຍ ຊຶ່ງອີງໃສ່ຜົນກະທົບຂອງການປະຕິບັດຕົວຈິງ ດັ່ງນີ້:




*ຕາຕະລາງ 4 ວິເຄາະ ແລະ ກຳນົດບັນຫາ*

# ພາກທີ III ວິໄສທັດ 2022 ຮອດປີ 2032

## 3.1 ວິໄສທັດ

ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ເພື່ອຮັບປະກັນການຄົງຕົວ ແລະ ການເພີ່ມຂຶ້ນຂອງຈຳນວນປະຊາກອນຊ້າງປ່າ ແລະ ຊ້າງບ້ານ ໂດຍການມີສ່ວນຮ່ວມຂອງຊຸມຊົນ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ ໃຫ້ມີຄວາມຍືນຍົງ.

## 3.2 ເປົ້າໝາຍ

ເພື່ອເຮັດໃຫ້ປະຊາກອນຊ້າງປ່າ ແລະ ຊ້າງບ້ານ ມີຈຳນວນເພີ່ມຂຶ້ນ, ໄດ້ຮັບການຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາ ໃນຂອບເຂດທົ່ວປະເທດ ທັງຮັບປະກັນບໍ່ໃຫ້ຊ້າງສູນພັນ ແນໃສ່ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງ, ພ້ອມທັງກຳນົດການຄຸ້ມຄອງ ແລະ ຟື້ນຟູຖິ່ນທີ່ຢູ່ອາໄສຂອງຊ້າງ.

## 3.3 ຜົນປະໂຫຍດທີ່ຈະໄດ້ຮັບ

1. ປະຊາກອນຊ້າງປ່າ ແລະ ຊ້າງບ້ານ ໄດ້ຮັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ ໃຫ້ມີຄວາມຍືນຍົງ ແລະ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງ;
2. ເປັນແນວທາງ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ແລະ ຊ້າງບ້ານ ໃນຂອບເຂດທົ່ວປະເທດ;
3. ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາ ປະຊາກອນຊ້າງປ່າ ແລະ ຊ້າງບ້ານ ລວມທັງຖິ່ນທີ່ຢູ່ອາໄສຂອງຊ້າງ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

# ພາກທີ IV ແຜນດຳເນີນງານ ຊ້າງແຫ່ງຊາດ

## 4.1 ແຜນດຳເນີນງານ ຊ້າງແຫ່ງຊາດ

ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ສະບັບນີ້ ປະກອບມີ 06 ແຜນງານ ມີ 23 ໜ້າວຽກຈຸດສຸມ ດັ່ງລຸ່ມນີ້:

1. ແຜນງານ ປົກປັກຮັກສາ ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານ ຂອງຊ້າງປ່າ;
2. ແຜນງານ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ;
3. ແຜນງານ ສະກັດກັ້ນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ;
4. ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ;
5. ແຜນງານ ສ້າງຄວາມສາມາດໃຫ້ແກ່ພະນັກງານ ໃນການຄຸ້ມຄອງຊ້າງລ້ຽງ ແລະ ຊ້າງປ່າ
6. ແຜນງານ ໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ ໃນການອະນຸລັກຊ້າງ;

### 4.1.1 ແຜນງານ ປົກປັກຮັກສາ ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານ ຂອງຊ້າງປ່າ

ການຂະຫຍາຍພື້ນທີ່ການຜະລິດ ແລະ ການຫັນປ່ຽນທີ່ດິນປ່າໄມ້ ໄປເປັນປະເພດອື່ນ ເຊັ່ນ: ການກໍ່ສ້າງພື້ນຖານໂຄງລ່າງ, ເຂື່ອນໄຟຟ້ານໍ້າຕົກ, ການຂຸດຄົ້ນບໍ່ແຮ່, ຖະໜົນຫົນທາງ, ແລວສາຍໄຟ, ເຂດທຳການຜະລິດ ແລະ ການຕັ້ງບ້ານຂອງປະຊາຊົນ ໃນຖິ່ນອາໄສຂອງຊ້າງ, ແມ່ນເປັນສາຍເຫດ ເຮັດໃຫ້ຖິ່ນຢູ່ອາໄສຂອງຊ້າງລຸດລົງ, ຊຸດໂຊມ, ຕັດແຍກເປັນຕອນ, ສະນັ້ນ ຕ້ອງມີວິທີການແກ້ໄຂ, ກຳຈັດຜົນກະທົບດັ່ງກ່າວໃຫ້ໜ້ອຍລົງເພື່ອການປົກປັກຮັກສາ.

**ໜ້າວຽກຈຸດສຸມ:**

1. ປະເມີນສະຖານະພາບ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ;
2. ປະເມີນໄພຂົ່ມຂູ່ ແລະ ຄວາມສ່ຽງທີ່ອາດຈະເກີດຂຶ້ນ;
3. ກຳນົດເຂດອະນຸລັກຊ້າງປ່າ ແລະ ແລວເຊື່ອມຕໍ່;
4. ຟື້ນຟູ ຖິ່ນທີ່ຢູ່ອາໄສ ແລະ ສ້າງແຫຼ່ງອາຫານ ໃຫ້ຊ້າງປ່າ;

**ກິດຈະກຳ:**

1. ສຳຫລວດປະຊາກອນຊ້າງປ່າ, ຖິ່ນທີ່ຢູ່ອາໄສ, ການກະຈາຍ ແລະ ປະເມີນສະຖານະພາບຂອງຊ້າງປ່າ;
2. ປະເມີນຄວາມອຸດົມສົມບູນ ຖິ່ນທີ່ຢູ່ອາໄສ ຂອງຊ້າງປ່າ ໃນແຕ່ລະເຂດພື້ນທີ່;
3. ປະເມີນຄວາມສ່ຽງທີ່ຈະເກີດຜົນກະທົບຕໍ່ຖິ່ນທີ່ຢູ່ອາໄສ ຂອງຊ້າງປ່າ ໃນແຕ່ລະພື້ນທີ່;
4. ກວດກາຕິດຕາມ ການບຸກລຸກຖິ່ນຢູ່ອາໄສຂອງຊ້າງປ່າ;
5. ກຳນົດເຂດອະນຸລັກ, ເຂດແລວເຊື່ອມຕໍ່ ແລະ ສ້າງແຜນທີ່;
6. ປົກປັກຮັກສາ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ;
7. ເພີ່ມຄວາມອຸດົມສົມບູນຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ເຊັ່ນ: ປູກພືດ, ສ້າງອ່າງເກັບນໍ້າ ແລະ ສ້າງປ່ຽງທຽມ.

#### 4.1.2 ແຜນງານ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ.

ໃນໄລຍະຜ່ານມາເຄີຍມີຊ້າງປ່າອອກມາທໍາລາຍຜົນຜະລິດ, ຊັບສິນ ແລະ ຊີວິດ ຂອງປະຊາຊົນທີ່ອາໄສຢູ່ໃນ ແລະ ເຂດໃກ້ຄຽງປ່າ ຍ້ອນມີການລ່າ, ບຸກລຸກຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ຊຶ່ງເປັນສາເຫດເຮັດໃຫ້ເກີດຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ສະນັ້ນ, ຕ້ອງມີວິທີການແກ້ໄຂທີ່ເໝາະສົມ ເພື່ອຫຼຸດຜ່ອນຂໍ້ຂັດແຍ່ງ ດັ່ງກ່າວ.

**ໜ້າວຽກຈຸດສຸມ:**

1. ເກັບກໍາຂໍ້ມູນການເຄື່ອນຍ້າຍຂອງຊ້າງປ່າ, ສະຖານທີ່ເກີດ ບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ;
2. ສ້າງແຜນ ປ້ອງກັນ, ສະກັດກັ້ນ ການເກີດຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ;
3. ແກ້ໄຂບັນຫາ ຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ແລະ ຊົດເຊີຍຜົນເສຍຫາຍ;

**ກິດຈະກໍາ:**

1. ເກັບກໍາສະຖິຕິ ການເຄື່ອນຍ້າຍ ຂອງຊ້າງປ່າ, ສະຖານທີ່ເກີດບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ;
2. ສ້າງແຜນ ປ້ອງກັນ, ສະກັດກັ້ນ ການເກີດຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ;
3. ທວນຄືນນິຕິກໍາທີ່ສາມາດແກ້ໄຂຂໍ້ຂັດແຍ່ງຂອງຄົນກັບຊ້າງປ່າ ພາຍໃນ ແລະ ຕ່າງປະເທດ;
4. ສ້າງນິຕິແນະນໍາ ແລະ ຄູ່ມື ເພື່ອແກ້ໄຂຂໍ້ຂັດແຍ່ງຂອງຄົນກັບຊ້າງປ່າ;
5. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ແລະ ປະຊາຊົນ ໃນການປ້ອງກັນ, ແກ້ໄຂຂໍ້ຂັດແຍ່ງຂອງຄົນກັບຊ້າງປ່າ;
6. ຕິດຕາມ, ກວດກາ, ເຝົ້າລະວັງການເຄື່ອນຍ້າຍ ຂອງຊ້າງປ່າ;
7. ສ້າງວິທີການປ້ອງກັນຫລາຍຮູບແບບ ເຊັ່ນ: ຮົ້ວໄຟຟ້າ, ປູກໄມ້ເປັນແລວປ້ອງກັນ, ລະບົບສັນຍານເຕືອນໄພ, ທໍາຄອຍເຝົ້າລະວັງ, ຕິດຕາມການເຄື່ອນໄຫວຂອງຊ້າງ ແລະ ອື່ນໆ;
8. ສົ່ງເສີມປະຊາຊົນ ປູກພືດທີ່ຊ້າງປ່າບໍ່ມັກກິນ ເປັນຕົ້ນແມ່ນ ໝາກເຜັດ, ຂີງ, ກາເຟ ແລະ ອື່ນໆ ເພື່ອເປັນແລວກັນຊົນບໍ່ໃຫ້ຊ້າງເຂົ້າທໍາລາຍຜົນຜະລິດ;
9. ປັບປຸງຊະນິດພັນ ແລະ ສົ່ງເສີມເຕັກນິກການຜະລິດຜະລິດກະສິກໍາ;
10. ສ້າງທາງເລືອກໃນການພັດທະນາສ້າງແຫຼ່ງລາຍຮັບ ແລະ ສະບຽງອາຫານໃນການຫຼຸດຜ່ອນການອາໄສຊັບພະຍາກອນທໍາມະຊາດເປັນຫລັກ;
11. ສ້າງເຄືອຂ່າຍ ແລະ ລະບົບການຕະຫລາດຂັ້ນບ້ານ ເພື່ອສົ່ງເສີມການຜະລິດພາຍໃນ;
12. ພັດທະນາລະບົບກົນໄກການເງິນແບບຍືນຍົງເພື່ອການອະນຸລັກຊ້າງ;
13. ປັບປຸງ, ທວນຄືນລະບຽບການ ຂັ້ນບ້ານ ແລະ ສ້າງຕັ້ງທີມງານປ້ອງກັນຊ້າງປ່າທໍາລາຍການຜະລິດ.

#### 4.1.3 ແຜນງານ ສະກັດກັ້ນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ

ການລ່າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ ແມ່ນມີຂະບວນການຢ່າງກວ້າງຂວາງ ທັງພາຍໃນ ແລະ ບະດັບສາກົນ, ຊຶ່ງເປັນສາຍເຫດໃຫ້ປະຊາກອນຊ້າງປ່າຂ້າຕາຍເປັນຈໍານວນຢ່າງຫລວງຫລາຍ ແລະ ປະຊາກອນຊ້າງ

ມີການລຸດລົງໃນແຕ່ລະປີ, ເພື່ອສະກັດກັ້ນບັນຫາດັ່ງກ່າວ, ຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ ໃນວຽກງານສືບສວນ-ສອບສວນ ການຕ້ານ ແລະ ສະກັດກັ້ນ ການລັກລອບລ່າ ແລະ ຂ້າຊ້າງ ລວມທັງເຄືອຂ່າຍອາຊະຍາກຳຂ້າມຊາດ ແລະ ການຄ້າຂາຍ ໃນສື່ສັງຄົມອອນລາຍຕ່າງໆ.

**ໜ້າວຽກຈຸດສຸມ**:

1. ປ້ອງກັນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງທີ່ຜິດກົດໝາຍ;
2. ສ້າງເຄືອຂ່າຍຜູ້ບອກຂ່າວ ຕິດຕາມການລັກລອບຂ້າຊ້າງ ແລະ ຂາຍຜະລິດຕະພັນຈາກຊ້າງ ທີ່ຜິດກົດໝາຍ.

**ກິດຈະກຳ:**

1. ປະເມີນລະດັບຂອງນັກລ່າ,ການລ່າຊ້າງ, ການຜະລິດ ແລະ ການຄ້າຂາຍ;
2. ຈັດຕັ້ງການກວດກາ ຕິດຕາມການລ່າຊ້າງ, ແລະ ການຄ້າຂາຍຜະລິດຕະພັນຊ້າງ;
3. ສ້າງຄວາມສາມາດໃຫ້ເຈົ້າໜ້າທີ່ໃນການກວດກາ, ໃນການຈັບກູມຜູ້ກະທຳຜິດ (ຕາມແຜນປະຕິບັດງານຂອງ Lao WEN, P-WEN);
4. ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານເຄື່ອນໄຫວກວດກາຂອງຊຸມຊົນໃນການສະກັດກັ້ນການລັກລອບລ່າຊ້າງ;
5. ຈຳແນກລະດັບນັກລ່າຊ້າງ, ເຄືອນຂ່າຍ ແລະ ອຸປະກອນການລ່າຊ້າງ;
6. ສະໜອງສິ່ງອຳນວຍຄວາມສະດວກໃນການປະຕິບັດວຽກງານພາກສະໜາມ, ພະນັກງານ, ອຸປະກອນ;
7. ສ້າງບົດແນະນຳກ່ຽວກັບການສ້າງ ແລະ ຄຸ້ມຄອງຜູ້ບອກຂ່າວໃນພື້ນທີ່ຫລໍ່ແຫລມ;
8. ສ້າງລະບົບການລາຍງານຂໍ້ມູນປິດລັບກ່ຽວກັບການລ່າ ແລະ ຄ້າຂາຍຊ້າງຜິດກົດໝາຍ;
9. ສ້າງລະບົບການລາຍງານຂໍ້ມູນການເຄື່ອນໄຫວຂອງປະຊາກອນຊ້າງໃນບ້ານເປົ້າໝາຍ

#### 4.1.4 ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ

ການ ຕິດຕາມ, ກວດກາ, ສະກັດກັ້ນ,ສືບສວນ-ສອບສວນ ແລະ ດຳເນີນຄະດີ ຜູ້ກະທຳຜິດຄ້າຂາຍຊ້າງ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກຊ້າງທີ່ຜິດກົດໝາຍໄລຍະຜ່ານມາ ແມ່ນຍັງບໍ່ທັນເຂັ້ມແຂງ, ມີຫລາຍເຫດການກ່ຽວກັບການຂ້າຊ້າງ ບໍ່ໄດ້ຮັບການດຳເນີນຄະດີ ແລະ ແກ້ໄຂໄດ້. ເພື່ອແກ້ໄຂບັນຫາດັ່ງຈິ່ງມີຄວາມຈຳເປັນຕ້ອງໄດ້ຍົກລະດັບໃຫ້ເຈົ້າໜ້າທີ່ປ່າໄມ້ ແລະ ຄະນະປະສານງານເຄືອຂ່າຍການບັງຄັບໃຊ້ກົດໝາຍ Lao-WEN ແລະ P-WEN ໃຫ້ມີຄວາມເຂັ້ມແຂງໃຫ້ໄດ້ມາດຕະຖານ.

**ໜ້າວຽກຈຸດສຸມ:**

1. ປະເມີນຄວາມອາດສາມາດ ຂອງເຈົ້າໜ້າ ແລະ ອຳນາດໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີ ຕໍ່ຜູ້ກະທຳຜິດ ໃນການລ່າຊ້າງ ແລະ ການຄ້າຂາຍສິ່ນສ່ວນ;
2. ຍົກລະດັບຄວາມສາມາດໃຫ້ເຈົ້າໜ້າທີ່ປ່າໄມ້ ໃນການສືບສວນ-ສອບສວນ ແລະ ດຳເນີນຄະດີການຄ້າຂາຍ , ຊິ້ນສ່ວນ, ຜະລິດຕະພັນຈາກຊ້າງ ທີ່ຜິດກົດໝາຍ;

3. ປັບປຸງການປະສານງານ ແລະ ຮ່ວມມືຂອງຄະນະປະສານງານ Lao-WEN ແລະ P-WEN ໃຫ້ຕໍ່ເນື່ອງ

**ກິດຈະກຳ:**

1. ສ້າງຄວາມເຂັ້ມແຂງໃຫ້ເຈົ້າໜ້າທີ່ ໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ກະທຳຜິດ ລັກລອບລ່າ, ຂ້າ ແລະ ຄ້າຂາຍ;
2. ປະສານງານ, ແລກປ່ຽນຂໍ້ມູນ ແລະ ປະສົບການປະຕິບັດກົດໝາຍຂອງບັນດາຂະແໜງ ໃນການປະຕິບັດກົດໝາຍ;
3. ທັດສະນະສຶກສາ ຖອດຖອນບົດຮຽນ ວຽກງານສືບສວນ-ສອບສວນ ແລະ ດຳເນີນຄະດີ ກັບບັນດາປະເທດໃກ້ຄຽງ
4. ຈັດຕັ້ງການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ເຫດການທຳລາຍປະຊາກອນຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງມັນ;
5. ປັບປຸງຂອດການປະສານງານລະຫວ່າງຫ້ອງການປ່າສະຫງວນ ແລະ ຂະແໜງການອື່ນ ໃນການປະຕິບັດກົດໝາຍ.
6. ສ້າງສັນຍາການອະນຸລັກປະຊາກອນຊ້າງປ່າກັບຊຸມຊົນເຂດບ້ານເປົ້າໝາຍ

### 4.1.5 ແຜນງານ ສ້າງຄວາມສາມາດໃຫ້ແກ່ພະນັກງານ ໃນການຄຸ້ມຄອງຊ້າງລ້ຽງ ແລະ ຊ້າງປ່າ

ການຄຸ້ມຄອງ, ຕິດຕາມ,ການຂຶ້ນທະບຽນ, ການຝັງເລກປະຈຳຕົວຊ້າງບ້ານ (Microchip numbers) ແລະ ການສຶກສາຄົ້ນຄວ້າລະບົບນິເວດວິທະຍາຂອງຊ້າງ, ສຸຂະພາບ ແລະ ການຂະຫຍາຍພັນຊ້າງ ແມ່ນຍັງບໍ່ທັນໄດ້ຈັດຕັ້ງປະຕິບັດໄດ້ດີ ແລະ ຍັງຂາດຂໍ້ມູນ, ຂາດວິຊາການສະເພາະດ້ານ. ເພື່ອຍົກລະດັບວຽກງານດັ່ງກ່າວນີ້, ມັນຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານໃຫ້ດີກວ່າເກົ່າ.

**ໜ້າວຽກຈຸດສຸມ:**

1. ການຕິດຕາມການເຄື່ອນຍ້າຍຊ້າງປ່າ ໂດຍນຳໃຊ້ (GPS Collaring);
2. ການສຶກສາກ່ຽວກັບລະບົບນິເວດວິທະຍາຂອງຊ້າງ;
3. ສຳຫຼວດ, ເກັບກຳຂໍ້ມູນ ແລະ ປະເມີນຈຳນວນປະຊາກອນຊ້າງ ໃນທຸກໆ 05 ປີ;
4. ຄຸ້ມຄອງຖິ່ນທີ່ຢູ່ອາໄສຂອງຊ້າງ ຕາມຊາຍແດນແຫ່ງຊາດ;
5. ຂຶ້ນທະບຽນພິມຊ້າງ, ຝັງເລກປະຈຳຕົວຊ້າງບ້ານ (Microchip numbers) ແລະ ຕິດຕາມການເຄື່ອນຍ້າຍຊ້າງບ້ານ;
6. ສ້າງສູນຟື້ນຟູ, ປິ່ນປົວ, ຮັກສາສຸຂະພາບ ແລະ ຂະຫຍາຍພັນ ຊ້າງ;
7. ສ້າງ ແລະ ປັບປຸງ ກົນໄກການຕິດຕາມ ກວດກາ ການເຄື່ອນຍ້າຍ, ສົ່ງອອກ-ນຳເຂົ້າ ແລະ ຕິດຕາມຊີວິດການເປັນຢູ່ຂອງຊ້າງລາວ ຢູ່ຕ່າງປະເທດ.

**ກິດຈະກຳ:**

1. ສຳຫຼວດ ແລະ ກຳນົດເຂດພື້ນທີ່ບູລິມະສິດ ໃນການຕິດຕາມການເຄື່ອນໄຫວຂອງຊ້າງປ່າ;

2. ຝຶກອົບຮົມໃຫ້ພະນັກງານ ການນຳໃຊ້ GPS Collaring ໃນການຕິດຕາມການເຄື່ອນຍ້າຍຂອງຊ້າງປ່າ;
3. ສ້າງພະນັກງານວິຊາການສະເພາະການຍິງຢາສະລົບຊ້າງເພື່ອຕິດຕາມສຸຂະພາບ,ຂຶ້ນທະບຽນ ແລະ ໃຊ້ GPS ຕິດຕາມຊ້າງ
4. ສຳຫລວດ ແລະ ໃສ່ GPS Collaring ຕິດຕາມການເຄື່ອນໄຫວຂອງຊ້າງປ່າ;
5. ຝຶກອົບຮົມໃຫ້ ພະນັກງານຂັ້ນແຂວງ ແລະ ຊາວບ້ານ ໃນການໃຊ້ງານ, ຮັກສາສຸກຂະພາບ, ວິທີການລ້ຽງ, ການປະສົມພັນຊ້າງບ້ານ, ການຕິດຕາມອາການຊ້າງໃນຊ່ວງລະດູການຍ້ອຍ ເພື່ອປ້ອງກັນຄວາມເສຍຫາຍທີ່ຈະເກີດຂຶ້ນລະຫວ່າງຄົນ ແລະ ຊ້າງ;
6. ສ້າງປຶ້ມແນະນຳການຄຸ້ມຄອງຊ້າງປ່າ ແລະ ຊ້າງບ້ານ, (ສະຖານນະພາບ, ສຸຂະພາບ, ແລະ ການຂຶ້ນທະບຽນ Microchip numbers);
7. ສຶກສາກ່ຽວກັບ ລະບົບນິເວດວິທະຍາ ແລະ ພະຍາດລະບາດຂອງຊ້າງ;
8. ກວດກາຕິດຕາມ ປະຊາກອນຊ້າງບ້ານ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ສ້າງແຜນຮ່ວມມືການຄຸ້ມຄອງຊ້າງຕາມແນວຊາຍແດນ ແລະ ແລກປ່ຽນຂໍ້ມູນ;
10. ຈັດກອງປະຊຸມການຄຸ້ມຄອງຊ້າງ ແລະ ຖິ່ນອາໄສຂອງຊ້າງ ໃນທຸກໆປີ.

### 4.1.6 ແຜນງານ ໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ ໃນການອະນຸລັກຊ້າງ

ການຄຸ້ມຄອງ, ການດູແລ ປະຊາກອນຊ້າງ ແລະ ການປົກປັກຮັກສາຖິ່ນອາໄສຂອງມັນ ຍັງບໍ່ທັນເອົາໃຈໃສ່, ບໍ່ມີຄວາມຮັບຜິດຊອບ, ຈຶ່ງເຮັດໃຫ້ປະຊາກອນຊ້າງຖືກທຳລາຍ ແລະ ມີຈຳນວນລຸດລົງໃນແຕ່ລະປີ, ສະນັ້ນມັນຈຳເປັນຕ້ອງມີແຜນຍຸດທະສາດວຽກງານໂຄສະນາເຜີຍແຜ່ ການອະນຸລັກຊ້າງ ໃຫ້ປະຊາຊົນ, ກຸ່ມບໍລິການທ່ອງທ່ຽວ ໃຫ້ມີຄວາມເຂົ້າໃຈ,ມີຄວາມຮັບຜິດຊອບ ເພື່ອເຮັດໃຫ້ ປະຊາກອນຊ້າງ ມີຊີວິດອຸດົມສົມບູນ, ມີການຂະຫຍາຍພັນ ແລະ ບໍ່ມີການຂັດແຍ່ງ ລະຫວ່າງຄົນກັບຊ້າງ.

**ໜ້າວຽກ:**

1. ແຜນຍຸດທະສາດໂຄສະນາເຜີຍແຜ່ ປູກຈິດສຳນຶກ ກ່ຽວກັບ ການຄຸ້ມຄອງ, ອະນຸລັກຊ້າງ;
2. ສ້າງທີມງານຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກໃນການອະນຸລັກຊ້າງ;
3. ເພີ່ມທະວີການຮ່ວມມື ແລະ ແລກປ່ຽນແຜນການພັດທະນາ ກັບບັນດານັກລົງທຶນຢູ່ໃນພື້ນທີ່ອະນຸລັກຊ້າງ ແລະ ບັນດານັກລົງທຶນວຽກງານທ່ອງທ່ຽວທຳມະຊາດ.

**ກິດຈະກຳ:**

1. ສ້າງແຜນກິດຈະກຳການໂຄສະນາວຽກງານອະນຸລັກ;
2. ສ້າງຕັ້ງທີມງານ ຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ເປັນໜ່ວຍງານ ໂຄສະນາເຜີຍແຜ່ ສະເພາະ;
3. ສ້າງປຶ້ມໂຄສະນາການອະນຸລັກໃນລະດັບໂຮງຮຽນສາມັນ;
4. ສ້າງລະຄອນສັ້ນ, ໂປດສະເຕີ, ສື່ທາງໂທລະພາບ ແລະ ວິທະຍຸ ກ່ຽວກັບ ວຽກງານການອະນຸລັກຊ້າງ;

5. ຈັດຕັ້ງໂຄສະນາ ແລະ ປຸກຈິກສຳນຶກ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ ແລະ ປະຊາຊົນ ກ່ຽວກັບ ກົດໝາຍ ແລະ ການອະນຸລັກຊ້າງ;
6. ສ້າງແຜນການຮ່ວມມື ແລະ ເພີ່ມການປະສານງານ ກັບບັນດາໂຄງການກໍ່ສ້າງພື້ນຖານໂຄງຫລ່າງ ຢູ່ໃນເຂດຖິ່ນທີ່ຢູ່ອາໄສຂອງຊ້າງ

### 4.2 ຄວາມຮັບຜິດຊອບ

ເພື່ອຮັບປະກັນການບັນລຸຈຸດປະສົງ ແລະ ເປົ້າໝາຍ ຂອງແຜນດຳເນີນງານສະບັບນີ້ ໄດ້ແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບ ດັ່ງນີ້:

- ຂັ້ນສູນກາງ ໂດຍແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ແລະ ໄດ້ມອບໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງ ຮັບຜິດຊອບໂດຍກົງ ໃນການຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ລວມທັງອົງການຈັດຕັ້ງສາກົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຕະຫຼອດຮອດ ພໍ່ແມ່ປະຊາຊົນບັນດາເຜົ່າ ໃນການຈັດຕັ້ງປະຕິບັດແຜນດຳເນີນງານຄຸ້ມຄອງຊ້າງແຫ່ງຊາດ;
- ຂັ້ນທ້ອງຖິ່ນ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ໄດ້ມອບໃຫ້ ຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນແຂວງ, ກອງກວດກາປ່າໄມ້, ຂະແໜງລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ອົງການປົກຄອງເມືອງ, ເຈົ້າໜ້າທີ່ຕຳຫຼວດ, ທະຫານ, ພາສີ, ການຄ້າ, ທ່ອງທ່ຽວ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອດຳເນີນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ແລະ ຊ້າງບ້ານ;
- ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໂດຍແມ່ນ ໜ່ວຍງານປ່າໄມ້, ໜ່ວຍງານກວດກາປ່າໄມ້ ແລະ ໜ່ວຍງານລ້ຽງສັດ-ສັດຕະວະແພດ ເປັນຜູ້ປະສານງານ ແລະ ຮ່ວມມືກັບ ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ໃນການຈັດຕັ້ງປະຕິບັດ ເພື່ອຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ໃຫ້ມີຄວາມຍືນຍົງ;
- ອົງການປົກຄອງບ້ານ ກໍ່ຄື ປະຊາຊົນ ທີ່ດຳລົງຊີວິດຕິດພັນກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເປັນຜູ້ຈັດຕັ້ງປະຕິບັດ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

### 4.3 ງົບປະມານ

ເພື່ອເຮັດໃຫ້ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ບັນລຸຕາມທີ່ກຳນົດໄວ້ນັ້ນ, ຈຶ່ງໄດ້ກຳນົດງົບປະມານ ທີ່ຕ້ອງການໃນການເຄື່ອນໄຫວ ທັງໝົດ ຈຳນວນ 12.500.000 ໂດລາສະຫາລັດ (ສິບສອງລ້ານຫ້າແສນໂດລາສະຫະລັດ) ດັ່ງລາຍລະອຽດລຸ່ມນີ້:

| ແຜນງານ | ງົບທີ່ຕ້ອງການ USD |
|---|---|
| ແຜນງານ 1: ປົກປັກຮັກສາ ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານຂອງຊ້າງປ່າ; | 3.200.000 |

| | |
|---|---|
| ແຜນງານ 2: ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງລະຫວ່າງຄົນກັບຊ້າງປ່າ | 2.200.000 |
| ແຜນງານ 3: ສະກັດກັ້ນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ | 400.000 |
| ແຜນງານ 4: ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ | 1.000.000 |
| ແຜນງານ 5: ສ້າງຄວາມສາມາດໃຫ້ແກ່ພະນັກງານ ໃນການຄຸ້ມຄອງຊ້າງລ້ຽງ ແລະ ຊ້າງປ່າ | 3.500.000 |
| ແຜນງານ 6: ໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ ໃນການອະນຸລັກຊ້າງ | 1.400.000 |
| **ລວມ** | **11.700.000** |

*ຕາຕະລາງ 2 ງົບປະມານ ຂອງແຜນດຳເນີນງານ ໃນຊ່ວງໄລຍະ ປີ 2022 ຫາ ປີ 2032*

### 4.4 ແຫຼ່ງທຶນ

ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ມີແຫຼ່ງທຶນ ໃນການສະໜັບສະໜູນ ຈາກ ໂຄງການຄຸ້ມຄອງ ແລະ ອະນຸລັກຊ້າງ ທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ງົບປະມານປະຈຳປີຂອງລັດ, ກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF), ກອງທຶນປົກປັກຮັກສາປ່າໄມ້ (ກປປ), ຜູ້ປະກອບການທຸລະກິດທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ ແລະ ແຫຼ່ງທຶນອື່ນໆ.

# ພາກທີ V ການຈັດຕັ້ງປະຕິບັດ ແລະ ປະເມີນຜົນ

## 5.1 ການຈັດຕັ້ງປະຕິບັດ

ເພື່ອຈັດຕັ້ງປະຕິບັດແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ໃຫ້ມີປະສິບຜົນສຳເລັດ ແນໃສ່ເຮັດໃຫ້ປະຊາກອນຊ້າງປ່າ ແລະ ຊ້າງບ້ານ ເພີ່ມຂຶ້ນ ແລະ ໄດ້ຮັບການຄຸ້ມຄອງ, ອະນຸລັກ , ປົກປັກຮັກສາຊ້າງ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງປ່າ ໃຫ້ມີຄວາມຍືນຍົງ ແລະ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ. ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ນະຄອນ ເພື່ອແບ່ງຄວາມຮັບຜິດຊອບ ໃຫ້ລະ ອຽດ ແລະ ຈະແຈ້ງ ຕາມພາລະບົດບາດ ເຂົ້າໃນການຈັດຕັ້ງປະຕິບັດ ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032.

## 5.2 ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ

### 5.2.1. ການຕິດຕາມກວດກາ

ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ການຈັດຕັ້ງປະຕິບັດແຜນດຳເນີນງານຊ້າງແຫ່ງຊາດນີ້ ຕ້ອງມີການຕິດຕາມກວດກາເປັນປົກກະຕິ ແລະ ເປີດກອງປະຊຸມທົບທວນທຸກໆ 01 ປີ ລະຫວ່າງ ກົມປ່າໄມ້, ກົມກວດກາປ່າໄມ້, ກົມລ້ຽງສັດ ແລະ ການປະມົງ ແລະ ບັນດາພາກສ່ວນທີ່ມີສ່ວນຮ່ວມ ລວມທັງ ອົງການຈັດຕັ້ງສາກົນ ໃນການຄຸ້ມຄອງ ແລະ ອະນຸລັກ ຊ້າງປ່າ ແລະ ຊ້າງບ້ານ, ປະເມີນການຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ, ໃຫ້ມີສ່ວນຮ່ວມຂອງຊຸມຊົນ ໃນການແກ້ບັນຫາໄຂຂໍ້ຂັດແຍ່ງ ແລະ ຜົນສຳເລັດ ຂອງແຜນດຳເນີນງານ.

### 5.2.2. ການປະເມີນຜົນ

ກົມປ່າໄມ້, ກົມກວດກາປ່າໄມ້, ກົມລ້ຽງສັດ ແລະ ການປະມົງ ແລະ ອົງການຈັດຕັ້ງສາກົນ ຈະເຮັດການປະເມີນການຈັດຕັ້ງປະຕິບັດໜ້າວຽກ ແລະ ກິດຈະກຳ ຂອງແຜນດຳເນີນງານ, ການນຳໃຊ້ງົບປະມານ ແລະ ຂອດການປະສານງານເປັນຫຼັກ ປະຈຳປີ, ປະຈຳເຄິ່ງໄລຍະເວລາແຜນດຳເນີນງານ ແລະ ຕອນທ້າຍຂອງແຜນດຳເນີນງານ ໂດຍມີຜູ້ຕາງໜ້າຈາກກະຊວງການຕ່າງປະເທດ, ກະຊວງ ທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມ. ເມື່ອສຳເລັດການປະເມີນແລ້ວ ຈະຕ້ອງສົ່ງບົດລາຍງານໃຫ້ພາກສ່ວນກ່ຽວຂ້ອງພາຍໃນ ເວລາ 30 ວັນ.

### 5.2.3. ການລາຍງານ

ຄະນະຮັບຜິດຊອບການຈັດຕັ້ງປະຕິບັດແຜນດຳເນີນງານຊ້າງແຫ່ງຊາດ ຕ້ອງສົ່ງບົດລາຍງານການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ບົດລາຍງານການເງິນ ປະຈຳ 06 ເດືອນ, ປະຈຳປີ ແລະ ບົດລາຍງານເວລາສິ້ນສຸດໂຄງການ ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນທີ່ໃຫ້ທຶນ.

# ເອກະສານອ້າງອີງ


- ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ກົດໝາຍ ວ່າດ້ວຍປ່າໄມ້ ສະບັບປັບປຸງ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ), ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ດຳລັດ ວ່າດ້ວຍ ການສ້າງຕັ້ງປ່າສະຫງວນແຫ່ງຊາດ ສະບັບເລກທີ 164/ນຍ, ລົງ ວັນທີ 29 ຕຸລາ 1993;
- ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;
- ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງ ບັນຊີປະເພດສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ສະບັບເລກທີ 08/ນຍ, ລົງວັນທີ 25 ກຸມພາ 2021;
- ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານ ເພື່ອສະກັດກັ້ນ ແລະ ຕ້ານອາຊະຍະກຳສັດນ້ຳ ແລະ ສັດປ່າ ຂອງ ສປປ ລາວ ແຕ່ນີ້ຮອດປີ 2025 ສະບັບເລກທີ 0654/ກປ, ລົງວັນທີ 30 ມີນາ 2018;
- ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຂຶ້ນທະບຽນພິມສັດ, ສະບັບເລກທີ 1974/ກປ, ລົງວັນທີ 23 ສິງຫາ 2012;
- ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ສະບັບລົງລາຍເຊັນ ວັນທີ 23 ມີນາ 1973 ແລະ ດັດແກ້ວັນທີ 22ມິຖຸນາ 1979;
- ສູນສະຖິຕິແຫ່ງຊາດ. (2019);
- ແຜນດຳເນີນງານງາຊ້າງແຫ່ງຊາດ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0863/ກປ, ລົງວັນທີ 09 ມິຖຸນາ 2020;
- ອາເລັກ ເມີວິນລ່ຽມ. (2010). *ປຶ້ມຄູ່ມື ການກວດກາຕິດຕາມຂໍ້ຂັດແຍ່ງລະຫວ່າງຄົນກັບຊ້າງ.* ອົງການອະນຸລັກສັດປ່າ WCS ປະຈຳລາວ;
- AERSM. (2017). Asian elephant range states meeting final report 2017. *Ministry of Environment and Forestry.* Government of Indonesia;
- CITES. (2013). *Asian Elephant*. Retrieved 2019, from Convention on International Trade of Endangered Species of wild fauna and flora: https://www.cites.org/eng/gallery/species/mammal/asianelephant.html;
- Duckworth, J., & Hedges, S. (1988). *Tracking Tigers: A review of the Status of Tiger, Asian Elephant, Gaur, and Banteng in Vietnam, Lao, Cambodia, and Yunnan (China), with.* Hanoi, Vietnam: WWF Indochina Programme;
- FAO. (2002). *Technical report of the UNDP/FAO/GoL mission on human / elephant conflict resolution in Lao PDR.* Vientiane: Food and Agriculture Organization of the United Nations;

- IUCN. (2008). *Asian Elephant*. Retrieved 2019, from IUCN RED LIST: https://www.iucnredlist.org/species/7140/12828813#conservation-actions;
- Khounboline, K. (2011). Current Status of Asian Elephants in Lao PDR. *Gajah 35:62-66*.

## ເອກະສານຊ້ອນທ້າຍ

ການຈັດຕັ້ງປະຕິບັດ ແຜນດຳເນີນງານ ຊ້າງແຫ່ງຊາດ ຂອງ ສປປ ລາວ ໃນໄລຍະ ປີ 2022 ຮອດປີ 2032 ກຳນົດບັນດາໜ້າວຽກລະອຽດ ດັ່ງນີ້:

| ແຜນງານ ແລະ ໜ້າວຽກ | ພາກສ່ວນທີ່ຮັບຜິດຊອບ | ຕົວຊີ້ວັດ | ການຈັດຕັ້ງປະຕິບັດ | ງົບປະມານ USD |
|---|---|---|---|---|
| **ແຜນງານ 1: ປົກປັກຮັກສາ ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານ ຂອງຊ້າງປ່າ** | | | | **3.200.000** |
| ໜ້າວຽກ 1. ປະເມີນສະຖານະພາບ ແລະ ຖິ່ນທີ່ຢູ່ອາໄສຂອງຊ້າງ | DOF, PAFO | ມີຂໍ້ມູນດ້ານສິ່ງແວດລ້ອມ ແລະ ແຜນຄຸ້ມຄອງຖິ່ນທີ່ຢູ່ອາໄສ | ໄລຍະຍາວ | 200.000 |
| ໜ້າວຽກ 2. ປະເມີນໄພຂົ່ມຂູ່ ແລະ ຄວາມສ່ຽງທີ່ອາດຈະເກີດຂຶ້ນ | DOF, PAFO | ມີຂໍ້ມູນໄພຂົ່ມຂູ່ ແລະ ຄວາມສ່ຽງໄດ້ລາຍງານ | ໄລຍະຍາວ | 2.000.000 |
| ໜ້າວຽກ 3. ກຳນົດເຂດອະນຸລັກຊ້າງປ່າ ແລະ ແລວເຊື່ອມຕໍ່ | DOF, PAFO, WWF, WCS | ຈຳນວນຖິ່ນທີ່ຢູ່ອາໄສຂອງຊ້າງ ແລະ ແລວເຊື່ອມຕໍ່ໄດ້ສ້າງຂຶ້ນ | ໄລຍະກາງ | 500.000 |
| ໜ້າວຽກ 4. ຟື້ນຟູ ຖິ່ນທີ່ຢູ່ອາໄສ ແລະ ສ້າງແຫຼ່ງອາຫານ ໃຫ້ຊ້າງປ່າ | DOF, PAFO, WWF, WCS | ຈຳນວນພື້ນທີ່ຊຸດໂຊມ ໄດ້ມີການຟື້ນຟູປູກພືດເປັນອາຫານຊ້າງໃສ່ ແລະ ມີແຫລ່ງນ້ຳໃຫ້ຊ້າງນຳຕະລອດປີ | ໄລຍະກາງ | 500.000 |
| **ແຜນງານ 2: ແຜນງານ ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ** | | | | **2.200.000** |
| ໜ້າວຽກ1.ເກັບກຳຂໍ້ມູນການເຄື່ອນຍ້າຍຂອງຊ້າງປ່າ, ສະຖານທີ່ເກີດ ບັນຫາຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ; | PAFO, DOF, WWF, WCS | ມີຂໍ້ມູນໃຫ້ແກ້ໄຂການຂັດແຍ່ງຂອງຄົນກັບຊ້າງໃນໄລຍະຍາວ ແລະ ມີຂໍ້ມູນບັນຫາການຂັດແຍ່ງຂອງຄົນກັບຊ້າງໄດ້ຖືກລາຍງານ | ໄລຍະຕົ້ນ | 200.000 |

| | | | | |
|---|---|---|---|---|
| ໜ້າວຽກ 2. ສ້າງແຜນ ປ້ອງກັນ, ສະກັດກັ້ນ ການເກີດຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ; | DOF, PAFO, WWF, WCS | ຈຳນວນວິທີ, ແບບແຜນແກ້ໄຂຂໍ້ຂັດແຍ່ງໄດ້ຖືກສ້າງຂຶ້ນ ແລະ ຈັດຕັ້ງປະຕິບັດ; ບົດແນະນຳການແກ້ໄຂຂໍ້ຂັດແຍ່ງໄດ້ສ້າງຂຶ້ນ | ໄລຍະຕົ້ນ | 1.000.000 |
| ໜ້າວຽກ 3. ແກ້ໄຂບັນຫາ ຂໍ້ຂັດແຍ່ງ ລະຫວ່າງ ຄົນກັບຊ້າງປ່າ ແລະ ຊົດເຊີຍຜົນເສຍຫາຍ; | DOF, PAFO, WCS, WWF | ມີທາງເລືອກການພັດທະນາຊີວິດການເປັນຢູ່ ແລະ ຈຳນວນພື້ນທີ່ໄດ້ປູກພືດຊ້າງບໍ່ມັກໃສ່ | ໄລຍະຍາວ | 1.000.000 |
| **ແຜນງານ 3: ແຜນງານ ສະກັດກັ້ນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງ** | | | | **400.000** |
| ໜ້າວຽກ 1. ປ້ອງກັນການລັກລອບຂ້າຊ້າງ ແລະ ການຄ້າຂາຍຜະລິດຕະພັນຈາກຊ້າງທີ່ຜິດກົດໝາຍ | DOFI, POFI, WWF, WCS, Lao-WENT | ມີຂໍ້ມູນການລ່າຊ້າງ; ຈຳນວນຍຶດ ແລະ ການກວດຄົ້ນໃນການຈັດຕັ້ງປະຕິບັດ | ໄລຍະຕົ້ນ | 200.000 |
| ໜ້າວຽກ 2. ສ້າງເຄືອຂ່າຍຜູ້ບອກຂ່າວ ຕິດຕາມການລັກລອບຂ້າຊ້າງ ແລະ ຂາຍຜະລິດຕະພັນຈາກຊ້າງ ທີ່ຜິດກົດໝາຍ. | DOFI, POFI, WWF, WCS, Lao-WENT | ເຄືອຂ່າຍຈຳນວນຜູ້ບອກຂ່າວໄດ້ສ້າງຂຶ້ນ ແລະ ຂໍ້ມູນຕິດຕາມການທຳລາຍໄດ້ລາຍງານ | ໄລຍະກາງ | 200.000 |
| **ແຜນງານ 4: ແຜນງານ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ** | | | | **1.000.000** |
| ໜ້າວຽກ 1. ປະເມີນຄວາມອາດສາມາດ ຂອງເຈົ້າ ໜ້າ ແລະ ອຳນາດໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີຕໍ່ຜູ້ກະທຳຜິດ ໃນການລ່າຊ້າງ ແລະ ການຄ້າຂາຍສິ່ນສ່ວນ; | DOFI, POFI, WWF, WCS, Lao-WENT | ຈຳນວນພະນັກງານໄດ້ຮັບການຝຶກອົບຮົມ ແລະ ມີຈຳນວນຄັ້ງໃນການສືບສວນ-ສອບສວນ, ດຳເນີນຄະດີ | ໄລຍະຕົ້ນ | 100.000 |
| ໜ້າວຽກ 2. ຍົກລະດັບຄວາມສາມາດໃຫ້ເຈົ້າໜ້າທີ່ປ່າໄມ້ ໃນການສືບສວນ-ສອບສວນ ແລະ ດຳເນີນຄະດີການຄ້າຂາຍ, ຊິ້ນສ່ວນ, ຜະລິດຕະພັນຈາກຊ້າງ ທີ່ຜິດກົດໝາຍ; | DOFI, POFI, WWF, WCS, Lao-WENT | ຈຳນວນຄັ້ງປະຕິບັດກົດໝາຍ ແລະ ມີຖານຂໍ້ມູນຜະລິດຕະພັນຂອງຊ້າງ | ໄລຍະຕົ້ນ | 400.000 |

| | | | | |
|---|---|---|---|---|
| ໜ້າວຽກ 3. ປັບປຸງການປະສານງານ ແລະ ຮ່ວມມືຂອງຄະນະປະສານງານ Lao-WEN ແລະ P-WEN ໃຫ້ຕໍ່ເນື່ອງ | DOF, DOFI, POFI, WWF, WCS, Lao-WENT | ຈຳນວນບົດລາຍງານ ການບຸກລຸກ ແລະ ທຳລາຍຖິ່ນທີ່ຢູ່ອາໄສໄດ້ສ້າງຂຶ້ນ | ໄລຍະຕົ້ນ | 500.000 |
| **ແຜນງານ 5: ແຜນງານ ສ້າງຄວາມສາມາດໃຫ້ແກ່ພະນັກງານ ໃນການຄຸ້ມຄອງຊ້າງລ້ຽງ ແລະ ຊ້າງປ່າ** | | | | **3.500.000** |
| ໜ້າວຽກ 1. ການຕິດຕາມການເຄື່ອນຍ້າຍຊ້າງປ່າ ໂດຍນຳໃຊ້ (GPS Collaring) | DOF, WCS, WWF | ການຕິດຕາມການເຄື່ອນໄຫວຂອງຊ້າງ ໄດ້ຈັດຕັ້ງປະຕິບັດ | ໄລຍະຕົ້ນ | 500.000 |
| ໜ້າວຽກ 2. ການສຶກສາກ່ຽວກັບລະບົບນິເວດວິທະຍາຂອງຊ້າງ | DOF, DLF, PAFO, WWF, WCS | ຈຳນວນການສຶກສາ, ການວິເຄາະ ແລະ ບົດລາຍງານປະຊາກອນຊ້າງໄດ້ສ້າງຂຶ້ນ | ໄລຍະຕົ້ນ | 400.000 |
| ໜ້າວຽກ 3. ສຳຫຼວດ, ເກັບກຳຂໍ້ມູນ ແລະ ປະເມີນຈຳນວນປະຊາກອນຊ້າງ ໃນທຸກໆ 05 ປີ | DOF, DLF, PAFO, WWF, WCS | ຈຳນວນປະຊາກອນຊ້າງໃນທົ່ວປະເທດໄດ້ສຳຫລວດ ແລະ ລາຍງານໃນທຸກ 5 ປີ | ໄລຍະຕົ້ນ | 500.000 |
| ໜ້າວຽກ 4. ຄຸ້ມຄອງຖິ່ນທີ່ຢູ່ອາໄສຂອງຊ້າງ ຕາມຊາຍແດນແຫ່ງຊາດ | DOF, DLF, PAFO, WWF, WCS | ຈຳນວນແຜນການຮ່ວມມືຄຸ້ມຄອງປະຊາກອນຊ້າງປ່າຕາມຊາຍແດນໄດ້ສ້າງຂຶ້ນ | ໄລຍະຍາວ | 200.000 |
| ໜ້າວຽກ 5. ຂຶ້ນທະບຽນພິມຊ້າງ, ຝັງເລກປະຈຳຕົວຊ້າງບ້ານ (Microchip numbers) ແລະ ຕິດຕາມການເຄື່ອນຍ້າຍຊ້າງບ້ານ; | DLF, PAFO | ຊ້າງບ້ານ ໄດ້ຮັບການຕິດຕາມ ແລະ ຄຸ້ມຄອງ | ໄລຍະຕົ້ນ | 200.000 |
| ໜ້າວຽກ 6. ສ້າງສູນຟື້ນຟູ, ປິ່ນປົວ, ຮັກສາສຸຂະພາບ ແລະ ຂະຫຍາຍພັນ ຊ້າງ | DOF, DLF, PAFO, WWF, WCS | ຈຳນວນສູນຟື້ນຟູ ແລະ ຂະຫຍາຍພັນຊ້າງ ໄດ້ຮັບການສ້າງຂຶ້ນ | ໄລຍະຍາວ | 1.500.000 |

| | | | | |
|---|---|---|---|---|
| ໜ້າວຽກ 7. ສ້າງ ແລະ ປັບປຸງ ກົນໄກ ການຕິດຕາມ ກວດກາ ການເຄື່ອນຍ້າຍ, ສົ່ງອອກ - ນຳເຂົ້າ ແລະ ຕິດຕາມ ຊີວິດການເປັນຢູ່ຂອງຊ້າງລາວ ຢູ່ຕ່າງປະເທດ. | DOF, DLF, PAFO, WWF, WCS | ຈຳນວນຄັ້ງ ການຕິດຕາມ ກວດກາ ການເຄື່ອນຍ້າຍ, ສົ່ງອອກ - ນຳເຂົ້າ ແລະ ຕິດຕາມຊີວິດການເປັນຢູ່ຂອງຊ້າງລາວ ຢູ່ຕ່າງປະເທດ | ໄລຍະຍາວ | 200.000 |
| **ແຜນງານ 6: ແຜນງານ ໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ ໃນການອະນຸລັກຊ້າງປ່າ ແລະ ຊ້າງບ້ານ** | | | | **1.400.000** |
| ໜ້າວຽກ 1. ແຜນຍຸດທະສາດໂຄສະນາເຜີຍແຜ່ ປູກຈິດສຳນຶກ ກ່ຽວກັບ ການຄຸ້ມຄອງ, ອະນຸລັກຊ້າງ; | DOF, DLF, PAFO, WWF, WCS | ແຜ່ນໂປດສະຕິ/ຄູ່ມື ໂຄສະນາເຜີຍແຜ່ ການອະນຸລັກຊ້າງໄດ້ສ້າງຂຶ້ນ | ໄລຍະຕົ້ນ | 500.000 |
| ໜ້າວຽກ 2. ສ້າງທີມງານຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກໃນການອະນຸລັກຊ້າງ; | DOF, DLF, PAFO, WWF, WCS | ຈຳນວນຄັ້ງໂຄສະນາເຜີຍແຜ່ ໄດ້ຈັດຕັ້ງປະຕິບັດ | ໄລຍະກາງ | 700.000 |
| ໜ້າວຽກ 3. ເພີ່ມທະວີການຮ່ວມມື ແລະ ແລກປ່ຽນແຜນການພັດທະນາ ກັບບັນດານັກລົງທຶນຢູ່ໃນພື້ນທີ່ອະນຸລັກຊ້າງ ແລະ ບັນດານັກລົງທຶນໃນວຽກງານທ່ອງທ່ຽວທຳມະຊາດ | DOF, DLF, PAFO, WWF, WCS | ການເຂົ້າຮ່ວມ ແລະ ການຮ່ວມມືໄດ້ກວ້າງຂວາງ, ເພີ່ມຂຶ້ນ | ໄລຍະກາງ | 200.000 |
| **ງົບປະມານທັງໝົດ** | | | | **11.700.000** |

**ງົບປະມານທັງໝົດ: 11.700.000 ໂດລາ (ສິບເອັດລ້ານເຈັດແສນໂດລາສະຫະລັດ).**